# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ກັນຍາ 2022
ປີທີ 11
ສະບັບທີ 873


## ສະຫລຸບຕີລາຄາການປະຕິບັດວຽກງານກວດກາ ປະຈຳປີ 2021






(ສພຊ) ວັນທີ 2 ກັນຍາ 2022 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສະຫລຸບຕີລາຄາການປະຕິບັດວຽກງານກວດກາ ປະຈຳປີ 2021 ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມວຽກງານກວດກາທົ່ວປະເທດ ໂດຍການເຂົ້າຮ່ວມຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ປະທານສະພາແຫ່ງຊາດ ແລະ ເປັນປະທານກອງປະຊຸມຂອງສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ຄະນະປະຈຳພັກ, ປະທານກວດກາພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ມີບັນດາສະຫາຍຕາງໜ້າຈາກຄະນະກວດກາສູນກາງພັກ, ຄະນະກວດກາພັກສະພາແຫ່ງຊາດ, ຄະນະພັກ, ຄະນະໜ່ວຍພັກ, ຄະນະກົມ, ສູນ, ຫ້ອງການ ແລະ ຕາງໜ້າຈາກອົງການຈັດຕັ້ງມະຫາຊົນພາຍໃນສະພາແຫ່ງຊາດ ເຂົ້າຮ່ວມ.

ທັງນີ້, ເພື່ອສະຫລຸບຕີລາຄາການເຄື່ອນໄຫວວຽກງານກວດກາ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດ; ເພື່ອເປັນການເຜີຍແຜ່, ເຊື່ອມຊຶມ ເນື້ອໃນຈິດໃຈ ແລະ ຜົນສຳເລັດຂອງກອງປະຊຸມວຽກງານກວດກາທົ່ວປະເທດ ຄັ້ງທີ IV ປະຈຳປີ 2021 ແລະ ເພື່ອເຮັດໃຫ້ຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ ພາຍໃນສະພາແຫ່ງຊາດ ໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈ, ກຳແໜ້ນເນື້ອໃນວຽກງານກວດກາ ເພື່ອຫັນມາເປັນແຜນວຽກຂອງຕົນ ແລະ ຈັດຕັ້ງປະຕິບັດວຽກງານຕົວຈິງໃນແຕ່ລະໄລຍະ ແນ່ໃສ່ເຮັດວຽກງານກວດກາ ມີບາດກ້າວຫັນປ່ຽນຢ່າງຈະແຈ້ງ.

ກອງປະຊຸມ ໄດ້ຮັບຟັງການຜ່ານບົດສະຫລຸບການເຄື່ອນໄຫວວຽກງານກວດກາ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປີ 2022 ຂອງຄະນະກວດກາພັກສະພາແຫ່ງຊາດ ແລະ ເຜີຍແຜ່

ອ່ານຕໍ່ໜ້າ 2

## ສະເຫລີມສະຫລອງວັນຊາດຫວຽດນາມ ຄົບຮອບ 77 ປີ



ໜ້າ 7

## ຮອງປະທານ ສພຊ ຮັບເຄື່ອງຊ່ວຍເຫລືອຈາກມູນນິທິພັດທະນາລ້ານຊ້າງ-ແມ່ຂອງ




(ສພຊ) ວັນທີ 2 ກັນຍາ 2022, ທີ່ຫ້ອງຮັບແຂກສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫລືອລ້າ ປະເພດເຄື່ອງມືອຸປະກອນການຮຽນ-ການສອນ ຈາກມູນນິທິພັດທະນາລ້ານຊ້າງ-ແມ່ຂອງ ເພື່ອເປັນການຊ່ວຍ ເຫລືອຜູ້ທຸກຍາກເຂດຫ່າງໄກສອກຫລີກ ໃນຂອບເຂດທົ່ວປະເທດ ໂດຍຜ່ານສະມາຊິກສະພາແຫ່ງຊາດປະຈຳແຕ່ລະເຂດເລືອກຕັ້ງ ເພື່ອນຳສິ່ງມອບຕໍ່ໃຫ້ບັນດາເປົ້າໝາຍ ຕາງໜ້າກ່າວມອບໂດຍທ່ານ ພູສະຫວັນ ວົງວິຈິດ ທີ່ປຶກສາກິດຕິມະສັກມູນນິທິພັດທະນາລ້ານຊ້າງ-ແມ່ຂອງ ແລະ ຕາງໜ້າກ່າວຮັບໂດຍທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ປະກອບມີ: ປຶ້ມຂຽນ, ບິກ, ກະເປົາ, ຟອຍແຕ້ມຮູບ ແລະ ຊຸດກະດານແຕ້ມຮູບ ຈຳນວນ 36 ແກັດ ລວມມູນຄ່າ 100 ລ້ານກວ່າກີບ.

(ນາງ ກຸກກິກ ບຸດດາໄຊ)

## ສຳເລັດກອງປະຊຸມການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ




(ສພຊ) ໃນລະຫວ່າງວັນທີ 29-30 ສິງຫາຜ່ານມາ, ທີ່ເມືອງວັງວຽງ ແຂວງວຽງຈັນ ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມວິຊາການ ກ່ຽວກັບການຮັບ ແລະ ພິຈາລະນາເອົາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ທ່ານ

ອ່ານຕໍ່ໜ້າ 3

## ເຜີຍແຜ່ສົນທິສັນຍາດ້ານສິດທິມະນຸດ ທີ່ ສປປລາວ ເປັນພາຄີ




(ສພຊ) ເພື່ອເປັນການເຜີຍແຜ່, ສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການເຄື່ອນໄຫວວຽກງານສິດທິມະນຸດ ຂອງ ສປປລາວ ໃນເວທີສາກົນ ແລະ ພາກພື້ນ ລວມທັງພັນທະຕ່າງໆ ພາຍໃຕ້ສົນທິສັນຍາສາກົນທີ່ ສປປລາວ ເຂົ້າເປັນພາຄີ ໃຫ້ແກ່ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ); ກຳມາທິການ

ອ່ານຕໍ່ໜ້າ 2

## ແຂ່ງຂັນກິລາດອກປີກໄກ່ ທົ່ວປະເທດ ຄັ້ງທີ 21 ຊີງຂັນປະທານສະພາແຫ່ງຊາດ




ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 3

ຊົມເຊີຍວັນສ້າງຕັ້ງສະຫະພັນນັກຮົບເກົ່າ ແຫ່ງຊາດລາວ ຄົບຮອບ 20 ປີ (09/09/2002-09/09/2022) ຢ່າງສຸດໃຈ!

## ສພຊ...




ປິດສະຫລຸບ-ຕີລາຄາການເຄື່ອນໄຫວວຽກງານກວດກາ ແຕ່ປີ 2016-2021 ແລະ ບາງເນື້ອໃນຕົ້ນຕໍ ສໍາລັບການເຄື່ອນໄຫວ ແຕ່ປີ 2021-2026 ຂອງຄະນະກວດກາສູນກາງພັກ.

ໃນໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄໍາເຫັນໂອ້ລົມວ່າ: ຜ່ານການຮັບຟັງລາຍງານຈາກຄະນະກວດກາພັກສະພາແຫ່ງຊາດ ການປະກອບຄໍາເຫັນຂອງບັນດາສະຫາຍຜູ້ແທນກອງປະຊຸມຈໍານວນໜຶ່ງ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍມາຍັງຄະນະກວດກາພັກສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍທິດທາງແຜນການວຽກງານກວດກາຂອງຄະນະພັກສະພາແຫ່ງຊາດ ວາງອອກເປັນອັນລະອຽດ ເຂົ້າໃນການຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ ເພື່ອເຮັດໃຫ້ວຽກງານກວດກາພັກ-ກວດກາລັດ ແລະ ວຽກງານຕ້ານການສໍ້ລາດບັງຫລວງ ຢູ່ພາຍໃນສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດເປັນປົກກະຕິຕໍ່ເນື່ອງ ແລະ ມີຜົນສໍາເລັດດີຂຶ້ນເທື່ອລະກ້າວ ສະແດງອອກ ໃນດ້ານການເຄື່ອນໄຫວວຽກງານຂອງຄະນະກວດກາພັກສະພາແຫ່ງຊາດ ໄດ້ມີການວາງແຜນການ ແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາ, ບັນດາຮາກຖານພັກ ພາຍໃນສະພາແຫ່ງຊາດ ແຕ່ລະເດືອນກໍໄດ້ສະຫລຸບລາຍງານວຽກງານກວດກາຜ່ານບົດສະຫລຸບລວມຂອງບັນດາຮາກຖານພັກ ສົ່ງໃຫ້ຄະນະພັກສະພາແຫ່ງຊາດ ຢ່າງເປັນປົກກະຕິ ສິ່ງທີ່ຢັ້ງຢືນຜົນການກວດກາແມ່ນໄດ້ມີການປັບປຸງແບບແຜນການນໍາພາຂອງພັກ-ລັດ ຢູ່ພາຍໃນສະພາແຫ່ງຊາດ, ສະຕິການຈັດຕັ້ງ ສະມາຊິກພັກ, ພະນັກງານ-ລັດຖະກອນ ສູງຂຶ້ນ, ຜ່ານບັ້ນດໍາເນີນຊີວິດການເມືອງປະຈໍາປີ 2021 ກໍເຫັນວ່າ: ການຈັດປະເພດສະມາຊິກພັກ ແລະ ການປະເມີນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ສະມາຊິກພັກຈໍານວນຫລາຍຈັດຢູ່ໃນປະເພດແຂງ, ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ພະນັກງານ-ລັດຖະກອນ ກໍແມ່ນປະເພດດີເປັນສ່ວນຫລາຍ, ການແຈ້ງຊັບສິນ-ລາຍຮັບ ຮອບ III ຂອງພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ບັນລຸຕາມຄາດໝາຍທີ່ວາງໄວ້. ນອກນັ້ນ, ຍັງໄດ້ເປັນເຈົ້າການໃນການເຜີຍແຜ່ເຊື່ອມຊຶມເອກະສານ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານກວດກາໄດ້ທັນເວລາ ແລະ ເໝາະສົມ ທັງນີ້ກໍເພື່ອໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ໄດ້ເຊື່ອມຊຶມ, ມີຄວາມຮັບຮູ້, ເຂົ້າໃຈ ແລະ ນໍາໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ; ຜົນສໍາເລັດທີ່ກ່າວມານັ້ນ ຍ້ອນຄວາມເອົາໃຈໃສ່ຊີ້ນໍາ-ນໍາພາ ຂອງຄະນະກວດກາພັກທຸກຂັ້ນ ໃນວຽກງານກວດກາກໍເປັນລະບົບ ມີຄະນະກວດກາພັກສະພາແຫ່ງຊາດ, ກົມກວດກາເປັນເສນາທິການໃຫ້ແກ່ຄະນະພັກສະພາແຫ່ງຊາດ ເຖິງວ່າໄດ້ມີການສັບຊ້ອນບຸກຄະລາກອນ ບໍ່ທັນຄົບຕາມຕໍາແໜ່ງງານກໍຕາມ ແຕ່ກໍສາມາດເຄື່ອນໄຫວໄດ້ເປັນປົກກະຕິ ມາຮອດນີ້ບັນດາໜ່ວຍພັກຮາກຖານ, ຄະນະພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ ອົງການຈັດຕັ້ງມະຫາຊົນ ກໍມີຄະນະກວດກາໜ່ວຍພັກ, ຜູ້ເຮັດວຽກງານກວດກາໜ່ວຍພັກ ຕັ້ງໜ້າປະກອບສ່ວນໃນວຽກງານທີ່ໄດ້ຮັບມອບໝາຍດ້ວຍຄວາມເປັນເຈົ້າການ.

ໃນຕອນທ້າຍ, ສະຫາຍ ຄໍາໃບ ດໍາລັດ ໄດ້ກ່າວວ່າ: ກອງປະຊຸມສະຫລຸບວຽກງານກວດກາ ປະຈໍາປີ 2021 ຂອງຄະນະກວດກາພັກ-ລັດ ສະພາແຫ່ງຊາດ ໄດ້ສໍາເລັດລົງຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ຕະຫລອດໄລຍະຂອງການດໍາເນີນກອງປະຊຸມບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄໍາເຫັນ ຕໍ່ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງຄະນະກວດກາພັກສະພາແຫ່ງຊາດ ຢ່າງກົງໄປກົງມາ, ເລິກເຊິ່ງ ແລະ ດ້ວຍຄວາມຮັບຜິດຊອບສູງ ເຫັນວ່າໃນຕະຫລອດໄລຍະ 1 ປີຜ່ານມາ ຄະນະກວດກາພັກ-ລັດ ສະພາແຫ່ງຊາດ ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ຂອງແຜນການເຄື່ອນໄຫວວຽກງານຂອງຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດ ແລະ ຄະນະພັກສະພາແຫ່ງຊາດເປັນແຜນການເຄື່ອນໄຫວຂອງຕົນ ດ້ວຍການຫັນເປັນກິດຈະກໍາ, ໜ້າວຽກຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ສູ້ຊົນຈັດຕັ້ງປະຕິບັດໄດ້ຮັບຜົນສໍາເລັດຕາມຄາດໝາຍທີ່ວາງໄວ້; ພ້ອມນັ້ນ, ກໍໄດ້ປະກອບຄໍາເຫັນຕໍ່ບົດສະຫລຸບໃນຂອບເຂດວຽກງານກວດກາພັກ, ກວດກາລັດ ແລະ ວຽກງານການຕ້ານການສໍ້ລາດບັງຫລວງ ຢ່າງກົງໄປກົງມາ ເປັນການປະກອບໃນການເຊີດຊູບົດບາດຂອງສະພາແຫ່ງຊາດ ໃຫ້ນັບມື້ກວ້າງຂວາງ ແລະ ສູງຂຶ້ນ ເຊິ່ງຜົນສໍາເລັດຂອງກອງປະຊຸມຄັ້ງນີ້ ແມ່ນໝາກຜົນຂອງຄວາມເອົາໃຈໃສ່ຊີ້ນໍາ-ນໍາພາ ຢ່າງໃກ້ຊິດຂອງຄະນະພັກສະພາແຫ່ງຊາດ, ຄວາມເອົາໃຈໃສ່ຊີ້ນໍາ ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ດ້ວຍຄວາມສາມັກຄີເປັນເອກະພາບ, ການປະສານສົມທົບຢ່າງກົມກຽວ ຂອງບັນດາຮາກຖານພັກ ແລະ ອົງການຈັດຕັ້ງມະຫາຊົນ ພາຍໃນສະພາແຫ່ງຊາດ.

(ຂ່າວ: ສຸພາວັນ ທອມສະນິດ,
ພາບ: ກຸກກິກ ບຸດດາໄຊ)



## ເຜີຍແຜ່...

ການຕ່າງປະເທດສະພາແຫ່ງຊາດ ຮ່ວມກັບກະຊວງການຕ່າງປະເທດ ໄດ້ຈັດກອງປະຊຸມສໍາມະນາເຜີຍແຜ່ສົນທິສັນຍາສາກົນດ້ານສິດທິມະນຸດທີ່ ສປປ ລາວ ເປັນພາຄີ ໃຫ້ແກ່ ສສຊ ແລະ ສສຂ ຂອງ 4 ແຂວງພາກໃຕ້ ໃນລະຫວ່າງວັນທີ 1-2 ກັນຍາຜ່ານມາ, ທີ່ສະໂມສອນແຂວງສາລະວັນ ໂດຍການເປັນປະທານຮ່ວມລະຫວ່າງທ່ານ ສັນຍາ ປຣະເສີດ ປະທານກໍາມາທິການການຕ່າງປະເທດ ແລະ ທ່ານ ທອງຜ່ານ ສະຫວັນເພັດ ຮອງລັດຖະມົນຕີກະຊວງການຕ່າງປະເທດ, ຮອງປະທານຄະນະກໍາມະການແຫ່ງຊາດ; ມີບັນດາ ສສຊ ແລະ ສສຂ ຂອງແຂວງສາລະວັນ, ຈໍາປາສັກ, ເຊກອງ ແລະ ອັດຕະປື, ຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ ຈາກກະຊວງການຕ່າງປະເທດ ແລະ ກໍາມາທິການການຕ່າງປະເທດສະພາແຫ່ງຊາດ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງຄວາມຮູ້ພື້ນຖານກ່ຽວກັບວຽກງານສິດທິມະນຸດ ແລະ ການເຄື່ອນໄຫວວຽກງານສິດທິມະນຸດ ຂອງ ສປປລາວ ໃນເວທີພາກພື້ນ ແລະ ສາກົນ ຈາກຕາງໜ້າກົມສົນທິສັນຍາ ແລະ ກົດໝາຍ ກະຊວງການຕ່າງປະເທດ; ພາລະບົດບາດຂອງສະພາແຫ່ງຊາດ ຕໍ່ກັບການຮັບຮອງ, ໃຫ້ສັດຕະຍາບັນ ແລະ ການເຂົ້າຮ່ວມເປັນພາຄີ, ສົນທິສັນຍາ, ການຕິດຕາມການຈັດຕັ້ງປະຕິບັດພັນທະພາຍໃຕ້ສົນທິສັນຍາສາກົນ ຈາກຕາງໜ້າກົມພົວພັນລັດຖະສະພາຫລາຍຝ່າຍ ກໍາມາທິການການຕ່າງປະເທດ; ການເຂົ້າຮ່ວມຂະບວນການທົບທວນປະຈໍາໄລຍະດ້ານສິດທິມະນຸດ (UPR) ຮອບວຽນທີ 3 ຕາງໜ້າກົມສົນທິສັນຍາ ແລະ ກົດໝາຍກະຊວງການຕ່າງປະເທດ; ວຽກງານການຄຸ້ມຄອງການເຄື່ອນໄຫວສາສະໜາ ຢູ່ ສປປລາວ ຈາກຜູ້ຕາງໜ້າກົມຊົນເຜົ່າ ແລະ ສາສະໜາ ກະຊວງພາຍໃນ; ສັງລວມຂໍ້ກ່າວຫາກໍລະນີຕ່າງໆພາຍໃຕ້ຂັ້ນຕອນພິເສດ ສປຊ ແລະ ການຕອບໂຕ້ຊີ້ແຈງອະທິບາຍຂອງ ສປປລາວ ແລະ ການເຜີຍແຜ່ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ຈາກຕາງໜ້າກົມສົນທິສັນຍາ ແລະ ກົດໝາຍ ກະຊວງການຕ່າງປະເທດ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ຝຶກປ່ຽນກັນປະກອບຄໍາຄິດຄໍາເຫັນໃສ່ບົດຕ່າງໆ ແລະ ສົນທະນາຖອດຖອນບົດຮຽນຕາມບັນຫາທີ່ຕົນເອງໃຫ້ຄວາມສໍາຄັນ ແລະ ຈໍາເປັນຕໍ່ການປະຕິບັດໜ້າທີ່ໃນທ້ອງຖິ່ນຂອງຕົນ.

ກອງປະຊຸມດັ່ງກ່າວ, ໄດ້ຮັບການສະໜັບສະໜູນຈາກແຜນງານມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານປົກຄອງທີ່ດີ ແລະ ການສ້າງລັດປົກຄອງດ້ວຍກົດໝາຍ (CEGGA).

(ສອນສັກ ວັນວິໄຊ)

# ເລື່ອງແຕ້ນ, ຂ່າວເດັດ

# ຄັດໂດຍ: ທອມສະນິດ

▫ *ນະຄອນຫລວງວຽງຈັນ ມີໂຮງຮຽນມັດທະຍົມສຶກສາ 187 ແຫ່ງ; ໃນນີ້, ໂຮງຮຽນເອກະຊົນ 81 ແຫ່ງ ໂຮງຮຽນທີ່ມີຊັ້ນ ມ4 ຈໍານວນ 166 ແຫ່ງ ເພີ່ມຈາກສົກຮຽນຜ່ານມາ 1 ແຫ່ງ ມີນັກຮຽນ 11.836 ຄົນ ໂຮງຮຽນມີຊັ້ນ ມ7 ມີ 102 ແຫ່ງ ເພີ່ມຂຶ້ນ 3 ແຫ່ງ ມີນັກຮຽນ 9.537 ຄົນ ເຊິ່ງຊັ້ນ ມ4 ສອບເສັງວັນທີ 6-8 ກໍລະກົດ 2022 ມີ 6 ວິຊາ ຄື: ພາສາລາວ-ວັນນະຄະດີ, ຄະນິດສາດ, ວິທະຍາສາດທໍາມະຊາດ, ວິທະຍາສາດສັງຄົມ ສຶກສາພົນລະເມືອງ ແລະ ພາສາອັງກິດ ແບ່ງເປັນ 50 ສູນນັກຮຽນມີໜ້າສອບເສັງຕົວຈິງ 11.238 ຄົນ ເສັງໄດ້ 11.229 ຄົນ ເທົ່າກັບ 99,9% ໃນນີ້, ໄດ້ສົມບູນ (ຄະແນນທຸກວິຊາບໍ່ຫລຸດ 5) 3.233 ຄົນ ເທົ່າກັບ 28,77% ໄດ້ຮອບດ້ານ (ຄະແນນທຸກວິຊາບໍ່ຫລຸດ 7) 1.372 ຄົນ ເທົ່າກັບ 12,21% ໄດ້ໃບປະກາສະນິຍະບັດແດງ (ຄະແນນທຸກວິຊາ 9 ຂຶ້ນໄປ) 30 ຄົນ ທຽບໃສ່ສົກຮຽນຜ່ານມາ ແມ່ນສາມາດຮັກສາມາດຕະຖານເດີມ ສໍາລັບຊັ້ນ ມ7 ສອບເສັງ 14-16 ກໍລະກົດ ມີ 5 ວິຊາ ຄື: ພາສາລາວ-ວັນນະຄະດີ, ຄະນິດສາດ, ກຸ່ມວິທະຍາສາດທໍາມະຊາດ, ກຸ່ມວິທະຍາສາດສັງຄົມ ແລະ ພາສາອັງກິດ ແບ່ງເປັນ 22 ສູນ ນັກຮຽນມີໜ້າສອບເສັງຕົວຈິງ 9.344 ຄົນ ເສັງໄດ້ 11.229 ຄົນ ເທົ່າກັບ 99,9% ໃນນີ້, ໄດ້ສົມບູນ (ຄະແນນທຸກວິຊາບໍ່ຫລຸດ 5) 4.933 ຄົນ ເທົ່າກັບ 52,79% ໄດ້ຮອບດ້ານ (ຄະແນນທຸກວິຊາບໍ່ຫລຸດ 7) 2.609 ຄົນ ເທົ່າກັບ 27,92% ໄດ້ໃບປະກາສະນິຍະບັດແດງ (ຄະແນນທຸກວິຊາ 9 ຂຶ້ນໄປ) 29 ຄົນ ທຽບໃສ່ສົກຮຽນຜ່ານມາ ເພີ່ມຂຶ້ນ 8 ຄົນ.*

**ນສພ. ວຽງຈັນໃໝ່ 31/08/2022**

▫ *ການສໍາຫລວດແຫ່ງຊາດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງໃນລາວ ປີ 2014 ສະແດງໃຫ້ເຫັນວ່າ ແມ່ຍິງ 1 ໃນ 3 ຄົນ ໄດ້ປະສົບກັບຄວາມຮຸນແຮງຢ່າງໜ້ອຍໜຶ່ງປະເພດ (ທາງກາຍ, ທາງເພດ ແລະ ອາລົມ) ໃນຊ່ວງໄລຍະໃດໜຶ່ງຂອງຊີວິດເຂົາເຈົ້າ. ເຖິງຢ່າງໃດກໍຕາມມີແມ່ຍິງລາວປະມານ 10% ເທົ່ານັ້ນ ທີ່ໄດ້ລາຍງານ ຫລື ຊອກຫາການບໍລິການຈາກເຈົ້າໜ້າທີ່ເຊັ່ນ: ສຸກສາລາ, ອົງການແມ່ຍິງ ຫລື ຕໍາຫລວດ, ນີ້ແມ່ນເນື່ອງມາຈາກການຂາດຄວາມຮູ້, ຄວາມໄວ້ວາງໃຈ ແລະ ການຈໍາກັດການບໍລິການທີ່ມີຄຸນນະພາບ ແລະ ມາດຕະຖານການດໍາເນີນງານນີ້, ມີຈຸດປະສົງເພື່ອຮັບປະກັນວ່າ: ບໍ່ມີປະຕູທີ່ຜິດສໍາລັບຜູ້ລອດຊີວິດທີ່ຊອກຫາການຊ່ວຍເຫລືອ, ຜູ້ລອດຊີວິດອາດຈະເຂົ້າໄປໃນລະບົບຢູ່ໃນຫລາຍຈຸດດ້ວຍຕົນເອງຢູ່ສຸກສາລາທີ່ໃກ້ທີ່ສຸດ, ຕໍາຫລວດ, ທີ່ພັກອາໄສທີ່ປອດໄພທີ່ໃກ້ທີ່ສຸດຖ້າມີ ຫລື ໂທຫາສາຍດ່ວນຂອງສະຫະພັນແມ່ຍິງລາວ, ຜູ້ໃຫ້ບໍລິການທັງໝົດຕ້ອງສາມາດໃຫ້ການດູແລ ໂດຍອີງໃສ່ບົດບາດຂອງເຂົາເຈົ້າ ແລະ ໄດ້ຮັບການເຝິກຝົນ ເພື່ອອ້າງອີງເຖິງການບໍລິການ ແລະ ຂະແໜງການອື່ນໆ.*

**ນສພ. ປະເທດລາວ 01/09/2022**

▫ *ໂຄງການກໍ່ສ້າງຂົວຂ້າມນໍ້າຂອງມິດຕະພາບລາວ-ໄທແຫ່ງທີ 5 (ບໍລິຄໍາໄຊ-ບຶງການ) ໄດ້ເລີ່ມລົງມືກໍ່ສ້າງໃນເດືອນສິງຫາ 2019 ເຊິ່ງເປັນໂຄງການເງິນກູ້ຈາກອົງການຄວາມຮ່ວມມືທາງດ້ານເສດຖະກິດກັບປະເທດເພື່ອນບ້ານ (ອົງການມະຫາຊົນ) ຈາກປະເທດໄທ (ອົງການ NEDA); ໃນນັ້ນ, ລັດຖະບານລາວ ໄດ້ຮັບເງິນກູ້ຢືມເປັນຈໍານວນເງິນ 1.380.067.000 ບາດ (ສະກຸນເງິນໄທ) ໂດຍໄດ້ແບ່ງອອກເປັນສອງສັນຍາຄື: ສັນຍາທີ 1 ສັນຍາກໍ່ສ້າງຂົວຂ້າມນໍ້າຂອງ ແລະ ສັນຍາທີ 2 ສັນຍາກໍ່ສ້າງທາງເຊື່ອມຕໍ່ເຂົ້າຂົວ ແລະ ກໍ່ສ້າງອາຄານດ່ານກວດຄົນເຂົ້າ-ອອກເມືອງ ມາຮອດເດືອນສິງຫາ 2022 ມີຄວາມຄືບໜ້າລວມທັງໝົດ 48%.*

**ນສພ.ປະເທດລາວ 02/09/2022**

# ສ້າງຄວາມເຂັ້ມແຂງໃຫ້ແກ່ ສສຂ ແລະ ພະນັກງານ ຂອງ ສພຂ ຈຳປາສັກ



(ສພຊ) ໃນວັນທີ 31 ສິງຫາ 2022 ທີ່ສະໂມສອນເມືອງໂຂງ ແຂວງຈຳປາສັກ, ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ສົມທົບກັບ ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ໄດ້ເປີດກອງປະຊຸມເຝິກອົບຮົມຍົກລະດັບຂີດຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງ ໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານ-ລັດຖະກອນທີ່ເປັນເສນາທິການຂອງ ສພຂ ຈຳປາສັກ ໂດຍການເປັນປະທານຂອງ ທ່ານ ສົມສີ ມະນີນິນ ກຳມະການພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ, ມີບັນດາທ່ານ ໃນຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຕາງໜ້າຄະນະຮັບຜິດຊອບໂຄງການແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດ, ບັນດາທ່ານນັກວິທະຍາກອນ, ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ຈາກບັນດາເຂດເລືອກຕັ້ງ 9 ເມືອງ, 1 ນະຄອນ ໃນແຂວງຈຳປາສັກ ເຂົ້າຮ່ວມ.

ຈຸດປະສົງ ເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນແຂວງ ໄດ້ຍົກສູງຄວາມສາມາດ, ມີຄວາມຮັບຮູ້ ແລະ ເຂົ້າໃຈ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານການຕິດຕາມກວດກາ ຂອງ 3 ຄະນະກຳມະການ ຂອງ ສພຂ ໃຫ້ແກ່ ສສຂ ແລະ ເຮັດໃຫ້ພະນັກງານ-ລັດຖະກອນ ຂອງ ສພຂ ມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບວຽກງານການເປັນເສນາທິການໃຫ້ແກ່ ສພຂ ໄດ້ເປັນຢ່າງດີ;

ກອງປະຊຸມເຝິກອົບຮົມໃນຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີບົດຮຽນຈາກບັນດາທ່ານນັກວິທະຍາກອນ ແລະ ພ້ອມທັງຮ່ວມກັນຄົ້ນຄວ້າ, ກຳແໜ້ນເນື້ອໃນຂອງກອງປະຊຸມ ເຊິ່ງມີທັງໝົດ 7 ຫົວຂໍ້ ຄື: ການຕິດຕາມກວດກາແຜນງົບປະມານ ແລະ ແຜນພັດທະນາເສດຖະກິດ-ສັງຄົມ; ກົນໄກ ແລະ ວິທີການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ການກວດສອບ ແລະ ກວດກາ ຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ວຽກງານການຕິດຕາມກວດກາການປະຕິບັດຄາດໝາຍສູ້ຊົນ ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ຄວາມຮູ້ພື້ນຖານກ່ຽວກັບວຽກງານຊົນເຜົ່າ ແລະ ສາສະໜາ; ວຽກງານການຕິດຕາມກວດກາການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີຂອງພົນລະເມືອງ; ທັກສະການລົງພົບປະຜູ້ມີສິດເລືອກຕັ້ງ; ການຈັດກອງປະຊຸມທາງໄກ ແລະ ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງ-ນະຄອນ.

ໂອກາດດັ່ງກ່າວ, ທ່ານ ສົມສີ ມະນີນິນ ໄດ້ຮຽກຮ້ອງໃຫ້ບັນດາທ່ານນັກສຳມະນາກອນທຸກທ່ານ ຈົ່ງໄດ້ຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາ ເຂົ້າໃນການຄົ້ນຄວ້າບົດຮຽນດ້ວຍຄວາມເປັນເຈົ້າການ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ເອົາໃຈໃສ່ຕິດຕາມການນຳສະເໜີບົດຮຽນຂອງວິທະຍາກອນໃນແຕ່ລະຫົວຂໍ້ ພ້ອມທັງໃຫ້ການຮ່ວມມືໃນການສົນທະນາ, ຖາມ-ຕອບ ແລະ ແລກປ່ຽນບົດຮຽນ ເຊິ່ງກັນແລະກັນ.

(ສອນສັກ ວັນວິໄຊ)

## ສຳເລັດ...

ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ; ມີຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກ; ຕາງໜ້າຈາກບັນດາພາກສ່ວນພາຍໃນສະພາແຫ່ງຊາດ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງໃນການຈັດກອງປະຊຸມໃນຄັ້ງນີ້ ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ທີ່ຜ່ານການຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຕາມຂອບເຂດຄວາມຮັບຜິດຊອບ ຂອງຄະນະປະຈຳສະພາແຫ່ງຊາດ ໃນການຮັບ ແລະ ພິຈາລະນາເອົາຄຳຮ້ອງຂໍຄວາມເປັນທຳ ທີ່ຍື່ນເຂົ້າມາສະພາແຫ່ງຊາດ; ຮັບປະກັນໃຫ້ມີເນື້ອໃນນິຕິກຳກ່ຽວກັບການຮັບເອົາ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ເປັນຕົ້ນ ມະຕິຂອງຄະນະປະຈຳ ແລະ ຮ່າງຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ມີຄວາມເປັນເອກະພາບ, ມີເນື້ອໃນຄົບຖ້ວນຕາມກົດໝາຍກຳນົດໄວ້.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳຂອງສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 132/ຄປຈ, ລົງວັນທີ 21 ສິງຫາ 2019 ໂດຍທ່ານ ນາງ ກັນທິນາ ປ້ານອິນທອນ ຫົວໜ້າກົມຕິດຕາມກວດກາວຽກງານຍຸຕິທຳ ແລະ ການສະເໜີຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ (ສະບັບປັບປຸງ) ຕາມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ; ການສະເໜີຮ່າງຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໂດຍທ່ານ ໄກມະນີ ເທບບົວລີ ວ່າການຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ເຊິ່ງຄູ່ມືດັ່ງກ່າວ ທີ່ຜ່ານມາແມ່ນອົງການ ເຮວວິຕັດ ສະວິດ ເພື່ອການພັດທະນາ (HELVETAS) ໃຫ້ການສະໜັບສະໜູນ, ແຕ່ຜ່ານການປະຕິບັດຕົວຈິງ ຄູ່ມືວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແມ່ນບໍ່ສາມາດຮ່າງສຳເລັດໄດ້ ຍ້ອນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ຫາກໍຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຍັງບໍ່ທັນໄດ້ປັບປຸງມະຕິຂອງຄະນະປະຈຳຂອງສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 132/ຄປຈ, ລົງວັນທີ 21 ສິງຫາ 2019 ກ່ຽວກັບການກວດກາ, ຄົ້ນຄວ້າ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ; ຈາກນັ້ນ ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳເຫັນໃສ່ບັນດາເນື້ອໃນຂອງກອງປະຊຸມຄັ້ງນີ້ ຢ່າງກົງໄປກົງມາ ເພື່ອຮັບປະກັນດ້ານເນື້ອໃນຂອງປຶ້ມຄູ່ມືໃຫ້ຮັດກຸມ, ຄົບຖ້ວນ, ສົມບູນ, ມີປະສິດທິພາບ ກ່ອນທີ່ຈະນຳມາໃຊ້ໃນວຽກງານຂອງກຳມາທິການ ແລະ ລົງເຜີຍແຜ່ໃຫ້ແຕ່ລະເຂດເລືອກຕັ້ງ.

ໂອກາດດັ່ງກ່າວ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກໍໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມດັ່ງກ່າວ ເຊິ່ງທ່ານໄດ້ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າຄືນຊື່ຂອງມະຕິໃຫ້ຖືກຕ້ອງ, ສອດຄ່ອງຕາມຫລັກການຂອງການຂຽນ ໂດຍອີງໃສ່ການປະກອບຄຳເຫັນຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້; ດ້ານໂຄງປະກອບ ແລະ ເນື້ອໃນຂອງຮ່າງມະຕິໃຫ້ຄົ້ນຄວ້າ, ປັບປຸງ, ຮຽບຮຽງ ປະໂຫຍກຄຳສັບ ໃຫ້ມີເນື້ອໃນລະອຽດ, ຄົບຖ້ວນ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ໂດຍສະເພາະແມ່ນໃນ 12 ມາດຕາທີ່ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນມາແລ້ວນັ້ນ ແລະ ມາດຕາອື່ນໆ ທີ່ເຫັນວ່າຍັງບໍ່ທັນສອດຄ່ອງກັບກົດໝາຍ ແລະ ລະບຽບການ; ບັນຫາຕ່າງໆທີ່ກອງປະຊຸມໄດ້ຍົກຂຶ້ນມາ ຂໍໃຫ້ຄະນະຮັບຜິດຊອບສັງລວມລະອຽດ ແລ້ວລາຍງານຂໍທິດຊີ້ນຳຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

(ອານຸສອນ ພູມມີທອນ)

# ປະທານ ກສຕສ ພົບປະ ຜູ້ມີສິດເລືອກຕັ້ງຢູ່ 3 ບ້ານ ຂອງ ນວ

(ສພຊ) ວັນທີ 29 ສິງຫາ ຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ (ນວ) ພ້ອມດ້ວຍຄະນະ ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງ ຊຸດທີ II ຢູ່ ວັດບ້ານຊຽງດາ ໂດຍມີຄະນະບ້ານ ແລະ ພໍ່ແມ່ປະຊາຊົນທັງ 3 ບ້ານຄື: ບ້ານຊຽງດາ, ບ້ານໂນນຫວາຍ ແລະ ບ້ານເມືອງນ້ອຍ ເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ຄະນະຜູ້ແທນ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມ ປະກອບມີ: ບັນດາມະຕິ, ກົດໝາຍ ແລະ ເນື້ອໃນບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງ ຊຸດທີ II; ຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ຮັບຄຳສະເໜີຈາກຜູ້ມີສິດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງ.

ໃນໂອກາດດັ່ງກ່າວ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ພ້ອມຄະນະ ໄດ້ມອບເຄື່ອງຊ່ວຍເຫລືອຈາກກອງທຶນຊ່ວຍເຫລືອສັງຄົມ ສະພາແຫ່ງຊາດ ປະກອບມີ: ເສື້ອ 100 ຜືນ, ຜ້າອັດປາກ-ອັດດັງ 50 ກັບ ແລະ ສະເປ ເຫລົ້າ 90 ປ້ອງກັນພະຍາດໂຄວິດ-19 ຈຳນວນ 50 ກ່ອງ ໃຫ້ແກ່ 3 ບ້ານ ເພື່ອນຳໄປແຈກຢາຍໃຫ້ຄອບຄົວທີ່ຂາດເຂີນ ແລະ ນຳໃຊ້ຢູ່ຫ້ອງ



## ແຂ່ງຂັນ...

(ສພຊ) ວັນທີ 1 ກັນຍາ 2022 ທີ່ສະໂມສອນດອກປີກໄກ່ເສດຖາ (ບຶງຂະຫຍອງ) ໄດ້ມີພິທີເປີດການແຂ່ງຂັນກິລາດອກປີກໄກ່ຊິງແຊ້ມທົ່ວປະເທດ ຄັ້ງທີ 21 ຊິງຂັນທ່ານປະທານສະພາແຫ່ງຊາດ ປະຈຳປີ 2022 ລາຍການ 21th BeerLao Badminton Championship 2022 ເຊິ່ງເປັນກຽດເຂົ້າຮ່ວມໃນພິທີເປີດການແຂ່ງຂັນຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ທ່ານ ປອ. ບຸນເຫລືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປລາວ, ປະທານຄະນະບໍລິຫານງານສະຫະພັນກິລາດອກປີກໄກ່ແຫ່ງຊາດລາວ; ທ່ານ ແສງພອນ ພົນອາມາດ ຫົວໜ້າກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ; ທ່ານ ສົມພູ ພົງສາ ຮອງປະທານ ແລະ ເລຂາທິການຄະນະກຳມະການໂອແລັມປິກແຫ່ງຊາດລາວ; ທ່ານ ສູນທອນ ພົມມະຈັກ ປະທານບໍລິສັດເບຍລາວ ຈຳກັດ; ທ່ານ ປອ. ໄຊບັນດິດ ຣາຊະພົນ ເລຂາທິການສະຫະພັນກິລາດອກປີກໄກ່ແຫ່ງຊາດລາວ ພ້ອມດ້ວຍບັນດາຄະນະສະຫະພັນດອກປີກໄກ່, ຄະນະນຳ, ຄູຝຶກ ແລະ ນັກກິລາໃນທົ່ວປະເທດເຂົ້າຮ່ວມ.

ຈຸດປະສົງຂອງການຈັດການແຂ່ງຂັນໃນຄັ້ງນີ້ ກໍເພື່ອສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດຄົບຮອບ 31 ປີ, ເພື່ອສ້າງຂະບວນການແຂ່ງຂັນກິລາດອກປີກໄກ່ພາຍໃນປະເທດ ໃຫ້ມີຄວາມຟົດຟື້ນທັງເພື່ອໃຫ້ນັກກິລາໄດ້ມີໂອກາດໃນການທົດສອບສີມືຂອງຕົນເອງ ແລະ ສາມາດເລືອກໄດ້ນັກກິລາດີເດັ່ນ ປະກອບເຂົ້າເປັນນັກກິລາທີມຊາດໃນລຸ້ນເຍົາວະຊົນ ແລະ ລຸ້ນທົ່ວໄປ.

ທ່ານ ປອ. ໄຊບັນດິດ ຣາຊະພົນ ໄດ້ກ່າວເປີດງານການແຂ່ງຂັນກິລາດອກປີກໄກ່ຊິງແຊ້ມທົ່ວປະເທດວ່າ: ການແຂ່ງຂັນໃນຄັ້ງນີ້ ໄດ້ປະກາດການຮັບສະໝັກມີທັງໝົດ 13 ລາຍການ ປະກອບມີ: ລຸ້ນເຍົາວະຊົນ 8 ລາຍ ການ ຄື: ດ່ຽວເຍົາວະຊົນຊາຍ-ຍິງ ອາຍຸບໍ່ເກີນ 12 ປີ, ດ່ຽວເຍົາວະຊົນຊາຍ ອາຍຸບໍ່ເກີນ 15 ປີ, ດ່ຽວເຍົາວະຊົນຍິງ ອາຍຸບໍ່ເກີນ 15 ປີ, ຄູ່ເຍົາວະຊົນຊາຍ ອາຍຸບໍ່ເກີນ 15 ປີ, ດ່ຽວເຍົາວະຊົນຊາຍ ອາຍຸບໍ່ເກີນ 18 ປີ, ດ່ຽວເຍົາວະຊົນຍິງອາຍຸບໍ່ເກີນ 18 ປີ, ຄູ່ເຍົາວະຊົນຊາຍ ອາຍຸບໍ່ເກີນ 18 ປີ, ຄູ່ເຍົາວະຊົນປະສົມ ອາຍຸບໍ່ເກີນ 18 ປີ; ນອກຈາກນັ້ນ, ຍັງມີລຸ້ນຊາວໜຸ່ມ-ທົ່ວໄປອີກ 5 ລາຍການ ຄື: ດ່ຽວຊາຍທົ່ວໄປ, ຄູ່ຍິງທົ່ວໄປ, ຄູ່ຊາຍທົ່ວໄປ, ຄູ່ປະສົມທົ່ວໄປ, ຄູ່ສະໝັກຫລິ້ນຊາຍທົ່ວໄປ ເຊິ່ງໃນການແຂ່ງຂັນຄັ້ງນີ້, ມີຜູ້ສະໝັກເຂົ້າຮ່ວມທັງໝົດ 354 ຄົນ ຍິງ 25 ຄົນ ເພີ່ມຂຶ້ນຈາກຄັ້ງກ່ອນປະມານ 10% ໂດຍມີທັງໝົດ 33 ພາກສ່ວນທີ່ມາຈາກບັນດາແຂວງ (ສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ, ຫົວພັນ, ອຸດົມໄຊ, ຫລວງພະບາງ, ບໍ່ແກ້ວ) ພາກສ່ວນທີ່ມາຈາກບັນດາສະໂມສອນ ແລະ ທີມພາຍໃນນະຄອນຫລວງວຽງຈັນ. ພາຍຫລັງສັງລວມລາຍຊື່ຜູ້ສະໝັກໃນລາຍການຕ່າງໆແລ້ວເຫັນວ່າມີຈຳນວນ 2 ລາຍການທີ່ບໍ່ສາມາດຈັດແຂ່ງຂັນໄດ້ ເນື່ອງຈາກຈຳນວນຜູ້ສະໝັກບໍ່ໄດ້ຕາມລະບຽບການ. ດັ່ງນັ້ນ, ໃນການກຳນົດເບື້ອງຕົ້ນທີ່ຈະຈັດແຂ່ງ 13 ລາຍການ ຈຶ່ງເຫລືອພຽງ 11 ລາຍການ ສ່ວນລາຍການທີ່ບໍ່ສາມາດຈັດແຂ່ງໄດ້ແມ່ນລາຍການ ດ່ຽວເຍົາວະຊົນຍິງ ອາຍຸບໍ່ເກີນ 15 ປີ ແລະ ດ່ຽວເຍົາວະຊົນຍິງ ອາຍຸບໍ່ເກີນ 18 ປີ; ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມວ່າ: ງານແຂ່ງຂັນກິລາຄັ້ງນີ້ແມ່ນຈະໄດ້ດຳເນີນການແຂ່ງຂັນນັບແຕ່ວັນທີ 1-4 ກັນຍາ 2022 ຈຶ່ງຈະສຳເລັດ; ດັ່ງນັ້ນ, ຂໍເຊີນຊວນບັນດາທ່ານພໍ່ແມ່ປະຊາຊົນຊາວລາວ ກໍຄືຊາວນະຄອນຫລວງວຽງຈັນ ແຂກຕ່າງດ້າວທ້າວຕ່າງແດນ ມາຮ່ວມຊົມ-ຮ່ວມເຊຍ ເພື່ອເຮັດໃຫ້ງານຄັ້ງນີ້ ປະສົບຜົນສຳເລັດຕາມຄາດໝາຍຢ່າງຈົບງາມ.

(ອານຸສອນ ພູມມີທອນ)

# ປະທານ ສພຂ ຜົ້ງສາລີ ຜັນຂະຫຍາຍເນື້ອໃນ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3

(ສພຊ) ຕອນເຊົ້າວັນທີ 29 ສິງຫາ 2022 ທີ່ສະໂມສອນເມືອງບຸນໃຕ້, ທ່ານ ທອງສີ ເສົາສຸລິພົມ ປະທານ ຄະນະປະຈຳສະພາປະຊາຊົນແຂວງ (ສພຂ), ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ 2 ພ້ອມດ້ວຍຄະນະທີມງານ ໄດ້ຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II, ມີບັນດາທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ກອງບັນຊາການທະຫານເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ, ອົງການແນວລາວສ້າງຊາດເມືອງ, ສະຫະພັນນັກຮົບເກົ່າ, ໜ່ວຍບໍລິການຂອງລັດວິສະຫະກິດປະຈຳເມືອງ, ພະນັກງານ-ລັດຖະກອນ, ພະນັກງານບຳນານ ແລະ ອົງການຈັດຕັ້ງບ້ານ 5 ບ້ານອ້ອມຂ້າງເທສະບານເມືອງເຂົ້າຮ່ວມທັງໝົດ ຈຳນວນ 153 ທ່ານ ຍິງ 62 ທ່ານ.



ກອງປະຊຸມຄັ້ງນີ້, ແນໃສ່ເຮັດໃຫ້ບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງແຂວງທີ່ ສພຊ ແລະ ສພຂ ຮັບຮອງເອົາໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ ເຊິ່ງເນື້ອໃນທີ່ມາຈັດຕັ້ງເຜີຍແຜ່ປະກອບມີ:

**ວຽກງານບຸກຄະລາກອນມີ** ມະຕິວ່າດ້ວຍການເລືອກຕັ້ງປະທານອົງການກວດສອບແຫ່ງລັດ; ມະຕິວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ມະຕິວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ;

**ວຽກງານຊີ້ເຂດລັດຖະບານມີ:** ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການປະຕິຮູບລັດວິສາຫະກິດໄລຍະຜ່ານມາ ແລະ ທິດທາງແຜນການຮອດທ້າຍປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ການຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສາມັນ ເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊຊຸດທີ IX; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາ ແລະ ທິດທາງແຜນການຕິດຕາມກວດກາໃນ 6 ເດືອນທ້າຍປີ 2022 ແລະ ປະຈຳປີ 2023 ຂອງ ສພຊ;

**ວຽກງານສ້າງ ແລະ ປັບປຸງກົດໝາຍມີ:** ມະຕິການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ (ສ້າງໃໝ່); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ປັບປຸງ); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍສົ່ງເສີມຈຸລະວິສາຫາກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ປັບປຸງ); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ(ປັບປຸງ); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ (ປັບປຸງ); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ (ປັບປຸງ); ມະຕິການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ(ປັບປຸງ).

ຕອນບ່າຍວັນດຽວກັນ, ທ່ານ ທອງສີ ເສົາສຸລິພົມ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວວຽກງານທີ່ບ້ານອາຢາ ມີອຳນາດການປົກຄອງບ້ານ ພ້ອມດ້ວຍຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງຈຳນວນ 60 ຄົນ ຍິງ 20 ຄົນ ແລະ ໃນໂອກາດທີ່ຄະນະເຄື່ອນໄຫວວຽກຄັ້ງນີ້ ໄດ້ນຳເອົາເກືອຈຳນວນໜຶ່ງໄປມອບໃຫ້ກັບພໍ່ແມ່ປະຊາຊົນບ້ານອາຢາອີກດ້ວຍ.

ພ້ອມນັ້ນ, ຍັງຈະສືບຕໍ່ເຄື່ອນໄຫວໄຫວທີ່ບ້ານສະໂນໃໝ່ ເມືອງບຸນໃຕ້ ແລະ ບ້ານຢາງເໜືອ, ບ້ານຫາດງາໃຕ້+ຫາດງາເໜືອ, ບ້ານກອງສະວີ, ຈຸດເທສະບານ ເມືອງສຳພັນ, ແຂວງຜົ້ງສາລີ ຮອດວັນທີ 2 ກັນຍາ 2022 ຈຶ່ງສຳເລັດ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ເຜີຍແຜ່ເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ແລະ ສພຂ ຫລວງນໍ້າທາ

(ສພຊ) ລະຫວ່າງວັນທີ 24-26 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ເມືອງສິງ ແລະ ເມືອງລອງ ແຂວງຫລວງນໍ້າທາ ເຊິ່ງເມືອງສິງທັງໝົດ 6 ຈຸດຄື: ສະໂມສອນເມືອງ, ບ້ານຈຽງມູນ, ບ້ານເອີຫລ້າ, ບ້ານຕາໝີ, ບ້ານຜີເຢີ, ບ້ານມົນະ ແລະ ເມືອງລອງ 6 ຈຸດຄື: ສະໂມສອນເມືອງ, ບ້ານເຕົ້າໂຮມ, ບ້ານສາລາ, ບ້ານສົມປານໃຕ້, ບ້ານປຸ່ງຊາຍ-ຊຽງກົກໃໝ່, ບ້ານຈ່າແກ້ວ ເຊິ່ງນຳຄະນະໂດຍທ່ານ ຄຳຟອງ ອິນມານີ ປະທານ ສພຂ, ທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ຮອງປະທານ ສພຂ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງສິງ, ເມືອງລອງ; ເຂົ້າຮ່ວມຮັບຟັງມີຄະນະນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອະດີດການນຳຂອງເມືອງ, ອະດີດພະນັກງານປະຕິວັດອາວຸໂສ, ບຳນານ, ພະນັກງານ-ລັດຖະກອນອ້ອມຂ້າງແຂວງ, ຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານ ແລະ ປະຊາຊົນເຂົ້າຮ່ວມ 600 ກວ່າຄົນ.



ໂອກາດດັ່ງກ່າວ, ໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໂດຍໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາທີ່ເປັນພື້ນຖານສຳຄັນຂອງປະເທດຊາດຄື: ວຽກງານຂອງລັດຖະບານ; ວຽກງານຂອງໄອຍະການປະຊາຊົນສູງສຸດ; ວຽກງານຂອງສພຊ; ວຽກງານສ້າງ ແລະ ປັບປຸງກົດໝາຍ; ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໄດ້ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມ ສພຊ ທັງໝົດ 20 ສະບັບ ດ້ວຍຄະແນນສຽງເຫັນດີຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ (ສສຊ) ສະເລ່ຍຄະແນນສູງສຸດ 99% ແລະ ຕໍ່າສຸດ 79%. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາທ່ານ ສສຊ, ຄວາມຕັດສິນໃຈຂອງລັດຖະບານ, ກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ນຳເອົາປະເທດຊາດກ້າວຂຶ້ນຢ່າງໝັກແໜ້ນ.

ພ້ອມນັ້ນ, ໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫລວງນໍ້າທາ ເຊິ່ງໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 2-4 ສິງຫາ 2022 ຢູ່ທີ່ສະໂມສອນຂອງແຂວງ, ມີບັນດາທ່ານ ສສຊປະຈຳເຂດເລືອກຕັ້ງ, ສສຂ ເຂົ້າຮ່ວມທັງໝົດ 27 ທ່ານ ຍິງ 7 ທ່ານ. ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນເປັນຕົ້ນແມ່ນການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງແຂວງ; ການຮັບຮອງເອົາບົດລາຍງານກ່ຽວກັບການຄຸ້ມຄອງລາຄາສິນຄ້າ ແລະ ການຄຸ້ມຄອງປໍ້ານໍ້າມັນພາຍໃນແຂວງກອງປະຊຸມ; ການຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ; ການຮັບຮອງຂໍ້ຕົກລົງຂອງເຈົ້າແຂວງຫລວງນໍ້າທາ ຈຳນວນ 2 ສະບັບ; ການຮັບຮອງເອົາ ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II.

ໃນຕອນທ້າຍ, ທ່ານ ຄຳຟອງ ອິນມານີ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກບາງບັນຫາ ເປັນຕົ້ນແມ່ນດ້ານການເມືອງ-ແນວຄິດຕິດພັນກັບການປັບປຸງການຈັດຕັ້ງຂັ້ນບ້ານ ເອົາໃຈໃສ່ເຮັດວຽກງານການເມືອງ-ແນວຄິດ ໂດຍການນຳເອົາມະຕິຄຳສັ່ງ, ລະບຽບກົດໝາຍຕ່າງໆ ເຜີຍແຜ່ເຊື່ອມຊຶມ ໃຫ້ປະຊາຊົນພາຍໃນກຸ່ມບ້ານ ຈຶ່ງມີແນວຄິດຫລັກໝັ້ນ, ອຸ່ນອ່ຽງທຸນທ່ຽງ, ເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ, ມີສະຕິລະວັງຕົວ ຕໍ່ທຸກກົນອຸບາຍມ້າງເພທຳລາຍຂອງພວກບໍ່ຫວັງດີ, ຮູ້ຈຳແນກມິດ-ສັດຕູຢ່າງຈະແຈ້ງ, ມີຄວາມສາມັກຄີປອງດອງ ປະກອບສ່ວນຢ່າງຕັ້ງໜ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາສັງຄົມ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈະເລີນກ້າວໜ້າຂຶ້ນເທື່ອລະກ້າວ. ຄຽງຄູ່ກັນນີ້ ກໍໃຫ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງບ້ານ ແລະ ບຸກຄະລາກອນ ຕິດພັນກັບການປັບປຸງແບບແຜນວິທີການເຮັດວຽກ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ໂດຍສະເພາະໜ່ວຍພັກບ້ານ, ອົງການປົກຄອງ, ແນວໂຮມ, ອົງການຈັດຕັ້ງມະຫາຊົນ, ປກສ ບ້ານ, ກອງຫລອນ ໃຫ້ສາມາດເຄື່ອນໄຫວຕາມພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນດີ; ເອົາໃຈໃສ່ວຽກງານສ້າງເສດຖະກິດຄອບຄົວ ເພື່ອແກ້ໄຂຄວາມທຸກຍາກ, ຕິດພັນກັບການສ້າງເສດຖະກິດຄອບຄົວ ເພື່ອແກ້ໄຂຄວາມທຸກຍາກເທື່ອລະກ້າວ, ເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃຫ້ເຂັ້ມງວດ, ຍົກສູງຄວາມສາມັກຄີຂອງທົ່ວປວງຊົນພາຍໃນບ້ານໃຫ້ປົກແຜ່ນ.

# ຄະນະນຳ ສພຂ ເຂົ້າຮ່ວມສຳມະນາໃຫ້ວິຊາການ ຄູ-ອາຈານ ທົ່ວເມືອງສາລະວັນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມ

(ສພຊ) ການສຳມະນາໃຫ້ວິຊາການຄູ-ອາຈານ ທົ່ວເມືອງສາລະວັນ ໃນໄລຍະພັກແລ້ງ ແລະ ເຜີຍແຜ່ກອງປະຊຸມສະໄໝສາມັນ 3 ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2021-2022, ຮັບຟັງເອກະສານຂໍ້ຕົກລົງວ່າດ້ວຍຈັນຍາບັນ, ຂໍ້ຫ້າມ ແລະ ການລົງວິໄນຕໍ່ຄູ ແລະ ບຸກຄະລາກອນ. ທັງນີ້, ກໍເພື່ອເປັນການແນະນຳໜ້າວຽກກະກຽມກ່ອນການໄຂສົກຮຽນໃໝ່ ແລະ ຕິດພັນກັບການສຳຫລວດກວດກາ, ວັດ-ປະເມີນ ແລະ ຕີລາຄາ



ຜົນງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ, ໃຫ້ຜູ້ບໍລິຫານການສຶກສາທິການ ແລະ ກິລາທົ່ວເມືອງ ໄດ້ກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ ແລະ ເຮັດໃຫ້ວຽກງານການສຶກສາທິການ ແລະ ກິລາທົ່ວເມືອງສາລະວັນ ໄດ້ມີບາດກ້າວໃໝ່ ແນໃສ່ການສຶກສາໃນຍຸກການພັດທະນາທີ່ກ້າວໄກ.

ໃນການສຳມະນາຄັ້ງນີ້, ທ່ານ ນາງ ສູນໄຖ ໄຊຍະແສງ

ອ່ານຕໍ່ໜ້າ 5...

# ເຄື່ອນໄຫວພົບປະພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ຢູ່ເມືອງໄຊ



(ສພຊ) ໃນລະຫວ່າງວັນທີ 22-24 ສິງຫາ 2022 ທ່ານ ສົມຈັນ ເທບພາລີ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໄຊ ແລະ ທ່ານ ທຸມມາ ປັນຍາສິດ ສສຂ ປະຈຳເຂດເລືອກຕັ້ງເມືອງໄຊ ແຂວງອຸດົມໄຊ ໄດ້ເຄື່ອນໄຫວພົບປະພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ເມືອງໄຊ ຈຸດບ້ານຫົວນ້ຳບາກ, ບ້ານແສນສຸວັນ, ແສນລາດ, ຫ້ວຍຊາງ, ປຸງຫຼຽງ ແລະ ບ້ານລ້ອງຍາ; ມີອົງການຈັດຕັ້ງບ້ານ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວຄັ້ງນີ້ ແມ່ນເພື່ອພົບປະພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ທີ່ອອກເປັນມະຕິຂອງກອງປະຊຸມ ແລະ ບົດສັງລວມຫຍໍ້ເນື້ອໃນກອງປະຊຸມ ເພື່ອສະເໜີໃຫ້ປະຊາຊົນຮັບຮູ້ ແລະ ມີຄວາມເຂົ້າໃຈ ວ່າກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາເນື້ອໃນບັນຫາສຳຄັນຫຍັງແດ່ຂອງຊາດ , ຂອງແຂວງ ແລະ ບັນຫາທີ່ພົ້ນເດັ່ນອື່ນໆທີ່ສັງຄົມໃຫ້ຄວາມສົນໃຈ.

ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດເຫັນ ແລະ ຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ ສສຂ ໃນການຄຸ້ມຄອງບໍລິຫານລັດ, ຕໍ່ກັບຄຳຄິດເຫັນດັ່ງກ່າວ ສສຂ ໄດ້ຊີ້ແຈງກັບທີ່ແລ້ວ ແລະ ບາງບັນຫາຈະໄດ້ສະຫລຸບສັງລວມສົ່ງໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຄົ້ນຄວ້າປຶກສາຫາລື ແລະ ມອບໃຫ້ຄະນະກຳມະການສະເໜີຕໍ່ພາກສ່ວນກ່ຽວຂ້ອງຄົ້ນຄ້ວາພິຈາລະນາແກ້ໄຂ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

(ແສງພອນ ອິນນະລົງ)

# ບົດສຳພາດປະທານຄະນະ ສສຊ ເຂດເລືອກຕັ້ງທີ 13

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໃຫ້ສຳພາດຕໍ່ສື່ມວນຊົນວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ ຄະນະ ສສຊ ປະຈຳເຂດເລືອກຕັ້ງ 13 ແລະ ຄະນະປະຈຳ ສພຂ ແມ່ນເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ກົດໝາຍໄດ້ກຳນົດໄວ້ ເຊິ່ງໄລຍະຜ່ານມາສາມາດຍາດມາໄດ້ຜົນງານທີ່ພົ້ນເດັ່ນຫລາຍດ້ານຄື:



**+ ດ້ານນິຕິບັນຍັດ ແລະ ນິຕິກຳຂອງແຂວງ:** ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ໄດ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນໃນການພິຈາລະນາ, ຮັບຮອງກົດໝາຍໃນກອງປະຊຸມຄັ້ງປະຖົມມະລຶກ, ສະໄໝວິສາມັນເທື່ອທີ 1 ແລະ ສາມັນເທື່ອທີ 2 ທີ່ຜ່ານ ມາເປັນຕົ້ນແມ່ນຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (221-225) ຂອງ ສພຊ ຈຳນວນ 96 ສະບັບ (ສ້າງໃໝ່ 38 ສະບັບ, ປັບປຸງ 58 ສະບັບ); ຮັບຮອງກົດໝາຍ 13 ສະບັບ. ນອກນັ້ນ, ຍັງໄດ້ມີການປະສານສົມທົບກັບອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງໃນການຈັດກອງປະຊຸມທາບທາມບັນດາຮ່າງກົດໝາຍ ແລະ ເຂົ້າຮ່ວມປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ມີ 10 ຄັ້ງ ຈຳນວນ 26 ສະບັບ, ນິຕິກຳໃຕ້ກົດໝາຍຂອງ ສພຊ ຈຳນວນ 4 ສະບັບ; ສຳລັບນິຕິກຳໃຕ້ກົດໝາຍຂອງແຂວງ ປັດຈຸບັນແມ່ນໄດ້ສາມາດພິຈາລະນາ, ຮັບຮອງບັນດາຫົວຂໍ້ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຜ່ານມາຈຳນວນ 16 ສະບັບ (ສ້າງໃໝ່ 13 ສະບັບ, ປັບປຸງ 3 ສະບັບ).

**+ ດ້ານການຕົກລົງບັນຫາສຳຄັນຂອງຊາດ ແລະ ທ້ອງຖິ່ນ:** ບັນດາທ່ານ ສສຊ ໄດ້ເຂົ້າຮ່ວມຄົ້ນຄວ້າ ປະກອບຄຳເຫັນຕໍ່ບັນຫາສຳຄັນຕ່າງໆຂອງຊາດທາງດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນ ທີ່ພິຈາລະນາ, ຮັບຮອງໃນກອງປະຊຸມຄັ້ງຕ່າງໆ ຂອງ ສພຊ ເຊິ່ງສາມາດຮັບຮອງເປັນມະຕິ ຈຳນວນ 24 ສະບັບ, ຄະນະສະມາຊິກສະພາປະຈຳເຂດເລືອກຕັ້ງ ຍັງໄດ້ເຂົ້າຮ່ວມປຶກສາລືວຽກງານອື່ນໆ ທີ່ສຳຄັນຕື່ມອີກຕາມຂອບເຂດສິດອຳນາດຂອງຕົນ ຕາມການເຊີນພາກສ່ວນອື່ນ; ຄະນະປະຈຳ ສພຂ ລວມທັງສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເປັນເຈົ້າການໃນການຄົ້ນຄວ້າປະກອບຄຳຄິດເຫັນໃນກອງປະຊຸມຄັ້ງປະຖົມມະລຶກ ແລະ ສະໄໝສາມັນເທື່ອທີ 2 ຂອງ ສພຂ ດ້ວຍຄວາມຮັບຜິດຊອບສູງ ໄດ້ພິຈາລະນາ, ຮັບຮອງບັນຫາສຳຄັນຕ່າງໆ ທາງດ້ານການເມືອງ, ການປົກຄອງ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນ ເຊິ່ງສາມາດຮັບຮອງມະຕິ 36 ສະບັບ.

**+ ດ້ານການຕິດຕາມກວດກາ:** ການປະຕິບັດພາລະບົດບາດ ໃນການຕິດຕາມກວດກາຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ໃນຜ່ານມາເຫັນວ່າຍັງເຄື່ອນໄຫວບໍ່ໄດ້ເຕັມທີ່ ຍ້ອນການລະບາດຂອງພະຍາດໂຄວິດ-19 ແຕ່ເຖິງຢ່າງໃດກໍຕາມ ຄະນະສະມາຊິກພວກເຮົາ ກໍໄດ້ເຄື່ອນໄຫວຈັດຕັ້ງປະຕິບັດບົນພື້ນຖານ ຄຳສັ່ງ, ຄຳແນະນຳ ຂອງຄະນະສະເພາະກິດຂັ້ນສູນກາງ ກໍຄືທ້ອງຖິ່ນ ເຊິ່ງໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໄດ້ 16 ຄັ້ງ ພ້ອມທັງຮ່ວມເຄື່ອນໄຫວນຳຄະນະປະຈຳ ສພຊ ໃນການລົງເຄື່ອນໄຫວຕິດຕາມກວດກາຢູ່ເຂດເລືອກຕັ້ງໄດ້ຫລາຍຄັ້ງ, ລົງເຄື່ອນໄຫວຊຸກຍູ້ ການຈັດຕັ້ງປະຕິບັດມະຕິຂອງ ສພຊ ກ່ຽວກັບ 2 ວາລະແຫ່ງຊາດ ຢູ່ 14 ເມືອງ ແລະ 1 ນະຄອນ; ຄະນະປະຈຳ ສພຂ ໄດ້ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ສັງລວມ ໄດ້ 47 ຄັ້ງ ເປັນຕົ້ນແມ່ນຕິດຕາມກວດກາ ກ່ຽວກັບສະພາບການແກ້ໄຂຂໍ້ຂັດແຍ່ງການນຳໃຊ້ທີ່ດິນປູກອ້ອຍ ໃນຮູບແບບ 2+3 ຢູ່ເມືອງໄຊບູລີ; ເກັບກຳຂໍ້ມູນກ່ຽວກັບການຂໍຄ່າຊົດເຊີຍເນື້ອທີ່ດິນຂອງປະຊາຊົນ ເມືອງວິລະບູ ໃນຈຳນວນ 58 ຄອບຄົວທີ່ຖືກຜົນກະທົບຈາກໂຄງການຂະຫຍາຍອ່າງເກັບນ້ຳເສຍແຫ່ງທີ 3 ຂອງບໍລິສັດ ລ້ານຊ້າງມິນິໂລນ ຈຳກັດ; ຕິດຕາມກວດກາການຈັດຕັ້ງປະຕິບັດງົບປະມານປີ 2021; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃນ 14 ເມືອງ 1 ນະຄອນ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ (ເມືອງນອງ ໃຫ້ກາຍເປັນເມືອງພົ້ນທຸກ); ສຳເລັດການແກ້ໄຂ ແລະ ນຳສົ່ງພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນເປົ້າໝາຍສ້າງວັດປ່າພຸດທຳມະລະນາລາມ (ວັດປ່າຫລັກ 19). ນອກຈາກນັ້ນ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ຍັງໄດ້ຕ້ອນຮັບປະຊາຊົນມາຂໍຄຳປຶກສາດ້ານກົດໝາຍໄດ້ທັງໝົດ 31 ຄັ້ງ ມີ 53 ເທື່ອຄົນ ຍິງ 12 ເທື່ອຄົນ, ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໄດ້ 13 ເລື່ອງ, ພິຈາລະນາແກ້ໄຂແລ້ວ 8 ເລື່ອງ ແລະ ກຳລັງສືບຕໍ່ພິຈາລະນາແກ້ໄຂ 5 ເລື່ອງ.

ທ່ານ ກົງແກ້ວ ມີວໍລະຈັກ ໄດ້ໃຫ້ຮູ້ກ່ຽວກັບຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຊ-ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍ ພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ມາເຖິງປັດຈຸບັນ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ກໍຄື ສພຂ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ໄດ້ເອົາໃຈໃສ່ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງຕ່າງໆຂອງກອງປະຊຸມ ສພຊ ຊຸດທີ IX ແລະ ຂອງ ສພຂ ຊຸດທີ II ພ້ອມທັງນຳເອົາລັດຖະທຳມະນູນກົດໝາຍ, ມະຕິຂອງ ສພຊ , ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍເຜີຍແຜ່ເຊື່ອມຊຶມໃຫ້ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງ ໃຫ້ຮັບຮູ້ ແລະ ເຂົ້າໃຈ ເຊິ່ງມີທັງໝົດ 89 ຈຸດ ມີຜູ້ເຂົ້າຮ່ວມທັງໝົດ 10.458 ຄົນ ຍິງ 4.183 ຄົນ; ຕິດພັນກັບການພົບປະຜູ້ມີສິດເລືອກຕັ້ງນັ້ນ ຄະນະ ສສຊ ແລະ ສສຂ ກໍໄດ້ນຳເອົາເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງນຸ່ງຮົ່ມ ແລະເງິນສົດຈຳນວນໜຶ່ງລົງມອບໃຫ້ປະຊາຊົນເຂດຫ່າງໄກສອກຫລີກ ລວມເປັນມູນຄ່າຈຳນວນ 532 ລ້ານກວ່າກີບ.

# ໜ່ວຍພັກຮາກຖານ ສພຂ ຈຳປາສັກ ເຊື່ອມຊຶມເອກະສານສຳຄັນຂອງພັກ



(ສພຊ) ໃນຕອນເຊົ້າວັນທີ 25 ສິງຫາ 2022 ໜ່ວຍພັກຮາກຖານສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໄດ້ເປີດກອງປະຊຸມເຊື່ອມຊຶມເອກະສານສຳຄັນຂອງພັກ ແລະ ຜ່ານແຜນດຳເນີນງານກອງປະຊຸມໃຫຍ່ໜ່ວຍພັກຮາກຖານ ສພຂ ຈຳປາສັກ ຄັ້ງທີ V ທີ່ຫ້ອງປະຊຸມຂອງ ສພຂ ພາຍໃຕ້ການເປັນປະທານ ແລະ ບັນລະຍາຍເອກະສານຂອງ ສະຫາຍ ສົມສີ ມະນີນິນ ກຳມະການພັກແຂວງ, ເລຂາໜ່ວຍພັກຮາກຖານ ສພຂ; ມີບັນດາສະຫາຍໃນຄະນະໜ່ວຍພັກຮາກຖານ, ສະມາຊິກພັກສົມບູນ-ສຳຮອງ ແລະ ມະຫາຊົນກ້າວໜ້າເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມເຊື່ອມຊຶມຄັ້ງນີ້, ແມ່ນປະຕິບັດຕາມແຈ້ງການຂອງຄະນະຈັດຕັ້ງແຂວງຈຳປສັກ ສະບັບເລກທີ 517/ຄຈຂ/ຈສ, ລົງວັນທີ 7 ກໍລະກົດ 2022 ແລະ ເພື່ອເປັນການກະກຽມການດຳເນີນກອງປະຊຸມໃຫຍ່ ຄັ້ງທີ V ຂອງໜ່ວຍພັກຮາກຖານ ສພຂ ຈຳປາສັກ ທັງເຮັດໃຫ້ພະນັກງານສະມາຊິກພັກ ແລະ ມະຫາຊົນກ້າວໜ້າພາຍໃນໜ່ວຍພັກຮາກຖານຂອງ ສພຂ ໄດ້ເຊື່ອມຊຶມກຳແໜ້ນຕໍ່ເນື້ອໃນເອກະສານຂອງພັກ ທີ່ນຳມາເຜີຍແຜ່ ເຊິ່ງສະຫາຍປະທານກອງປະຊຸມ ແລະ ຄະນະໜ່ວຍພັກຮາກຖານ ໄດ້ຜັດປ່ຽນກັນນຳສະເໜີເອກະສານສຳຄັນຂອງພັກຈຳນວນ 4 ເອກະສານຄື: ມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ສະໄໝທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 7 ສະໄໝທີ VIII ຂອງແຂວງຈຳປາສັກ, ມະຕິຂອງຄະນະປະຈຳພັກແຂວງ ເລກທີ 473/ຄຈພຂ.ຈສ ວ່າດ້ວຍການເງິນຂອງພັກ, ການຄຸ້ມຄອງ ແລະ ການນຳໃຊ້ເງິນສະຕິພັກຂອງອົງຄະນະພັກແຂວງຈຳປາສັກ, ຄຳສັ່ງແນະນຳຂອງຄະນະປະຈຳພັກແຂວງ ເລກທີ 03/ຄຈພຂ.ຈສ, ລົງວັນທີ 1 ຕຸລາ 2021 ວ່າດ້ວຍວຽກງານການຂະຫຍາຍພັກໃນໄລຍະໃໝ່. ຈາກນັ້ນ, ກອງປະຊຸມຍັງໄດ້ຜ່ານ ມະຕິຕົກລົງແຕ່ງຕັ້ງຄະນະຊີ້ນຳລວມ ແລະ ອະນຸກຳມະການຮັບໃຊ້ກອງປະຊຸມ ແລະ ຜ່ານແຜນດຳເນີນງານກອງປະຊຸມໃຫຍ່ໜ່ວຍພັກຮາກຖານ ສພຂ ຈຳປາສັກ ຄັ້ງທີ V ຈາກສະຫາຍ ທັບພະສອນ ສາມາເລີກ ກອງເລຂາຊ່ວຍວຽກໜ້າພັກຮາກຖານສະພາປະຊາຊົນແຂວງ ເຊິ່ງໄລຍະຜ່ານມາໜ່ວຍພັກຮາກຖານ ສພຂ ຈະໄດ້ມີກະກຽມການທາບທາມບຸກຄະລະກອນ ຕາມມາດຖານເງື່ອນໄຂ ເພື່ອປະກອບເຂົ້າໃສ່ໂຄງປະກອບຂອງຄະນະໜ່ວຍພັກຮາກຖານ ແລະ ໄດ້ກະກຽມເນື້ອໃນບົດປືນອ້ອມຮອບດ້ານໃຫ້ແກ່ການກະກຽມດຳເນີນກອງປະຊຸມໃຫຍ່ໜ່ວຍພັກຮາກຖານ ສພຂ ຈຳປາສັກ ຄັ້ງທີ V ແລະ ມີການສ້າງຂະບວນການຮອບດ້ານໃນທົ່ວໜ່ວຍພັກ ແລະ ອົງການຈັດຕັ້ງມະຫາຊົນ ຂອງຕົນ ໂດຍຕິດພັນກັບການເປີດຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ແລະ ວຽກງານອື່ນໆ.

ຕອນທ້າຍກອງປະຊຸມ, ສະຫາຍ ສົມສີ ມະນີນິນ ໄດ້ມີຄຳເຫັນ ແລະ ຊີ້ນຳຕໍ່ກອງປະຊຸມ ເຊິ່ງສະຫາຍໄດ້ເນັ້ນໃຫ້ຄະນະພັກ, ສະມາຊິກພັກສົມບຸນ-ສຳຮອງ ແລະ ມະຫາຊົນກ້າວໜ້າຈົ່ງສືບຕໍ່ເອົາໃຈໃສ່ໃນການສຶກສາຄົ້ນຄວ້າ, ຮ່ຳຮຽນ ແລະ ກຳແໜ້ນຕໍ່ເນື້ອໃນເອກະສານສຳຄັນຕ່າງໆຂອງພັກ ແລະ ພ້ອມກັນເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບຕາມການມອບໝາຍ ໃນການຈັດຕັ້ງປະຕິບັດແຜນດຳເນີນງານກອງປະຊຸມໃຫຍ່ໜ່ວຍພັກຮາກຖານ ສພຂ ຈຳປາສັກ ຄັ້ງທີ V ໃຫ້ມີຜົນສຳເລັດສູງຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

(ສົມວິຈິດ ໄຊມົນຕີ)

## ຄະນະ...

ຮອງປະທານສະພາປະຊາຊົນແຂວງ (ສພຂ) ແລະ ທ່ານ ນາງ ທອງໃບ ໄຊຍະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II, ໄດ້ຮັບຟັງຄຳຄິດຄຳເຫັນ ແລະ ຄຳສະເໜີຈຳນວນໜຶ່ງ ເພື່ອນຳໄປຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ ເຊິ່ງບັນຫາສ່ວນໃຫຍ່ແມ່ນຕິດພັນກັບສະພາບເສດຖະກິດຊີວິດການເປັນຢູ່ຂອງປະຊາຊົນໃນປັດຈຸບັນ ໂດຍກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 24 ສິງຫາ 2022 ທີ່ສະໂມສອນໂຮງຮຽນ ມສ. ອົງແກ້ວ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ບຸນລ້ອນ ວົງສັກດາ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ທ່ານ ນາງ ສູນໄຕ ໄຊຍະແສງ ຮອງປະທານ ສພຂ, ທ່ານ ນາງ ທອງໃບ ໄຊຍະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ, ແລະ ທ່ານ ສຸນີ ນາມມະບົວລີ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ມີບັນດາຮອງຫ້ອງການສຶກສາທິການ ແລະ ກິລາເມືອງ, ຜູ້ບໍລິຫານການສຶກສາ, ພະນັກງານຄູອາຈານທົ່ວເມືອງເຂົ້າຮ່ວມ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

108 ສາລະ

# ບຸນຫໍ່ເຂົ້າສະຫລາກ

ໂດຍ: ສອນສັກ ວັນວິໄຊ



ບຸນຫໍ່ເຂົ້າສະຫລາກ ເປັນບຸນປະເພນີສຳຄັນອັນໜຶ່ງ ໃນທາງພຸດທະສາສະໜາ ທີ່ມີມາຕັ້ງແຕ່ຄັ້ງພຸດທະການ ໂດຍໄດ້ມີການປະຕິບັດ ສືບທອດຕໍ່ກັນມາແຕ່ບູຮານນະການຮຸ່ນປູ່ຍ່າ, ຕາຍາຍ, ພໍ່ແມ່ ແລະ ລູກຫລານຈົນມາເຖິງປັດຈຸບັນ ເຊິ່ງຈະຈັດຂຶ້ນໃນເດືອນ 10 ເພັງຂອງທຸກໆປີ ແລະ ປີນີ້ ກົງກັບວັນຈັນທີ 10 ກັນຍາ; ຄຳວ່າ "ສະຫລາກນັ້ນ" ໝາຍເຖິງເຈ້ຍນ້ອຍທີ່ພວກເຮົາຂຽນຕິດໃສ່ໃນກວຍສະຫລາກ ຫລື ວ່າບຸນທີ່ໃຫ້ພຣະພິກຂຸສົງສາມະເນນທັງໝົດພາຍໃນວັດຈັບສະລາກແລ້ວ ຈຶ່ງໄດ້ຖວາຍທານຕາມລາຍຊື່ທີ່ພະພິກຂຸສົງສາມະເນນຈັບໄດ້ສະຫລາກນັ້ນ.

ເພື່ອຈະເຮັດໃຫ້ເຂົ້າໃນນາທີ່ປັກດຳໄປນັ້ນງອກງາມ, ໄດ້ຮັບຜົນສົມບູນ ແລະ ເປັນການອຸທິດສ່ວນບຸນກຸສົນເຖິງຜູ້ທີ່ລ່ວງລັບໄປແລ້ວ ເຊິ່ງຄວາມເປັນມາຂອງບຸນເຂົ້າສະຫລາກໃນບົດເທດສະໜາສະຫລອງບຸນເຂົ້າສະຫລາກໃນໜັງສືເທດສະໜາສະຫລອງຕ່າງໆ 50 ກັນ ໄດ້ກ່າວໄວ້ວ່າ: ໃນສະໄໝກ່ອນ ຄັ້ງພຸດທະການ ຢູ່ໃນເມືອງຫົງສາວະດີມະຫານະຄອນທານີ ມີຜົວເມຍຄູ່ໜຶ່ງ ເປັນຄົນອະນາຖາເຂັນໃຈ ສະແຫວງຫາລ້ຽງຊີບດ້ວຍການຕັດຟືນຂາຍຕາມພາສາຄົນຍາກຈົນ ແຕ່ເປັນຜູ້ເຫລື້ອມໃສໃນພຸດທະສາສະໜາ ຢູ່ມາມື້ໜຶ່ງ ຜູ້ເປັນຜົວມາຄົ້ນຄິດພິຈາລະນາການຫາລ້ຽງຊີບທີ່ຫຍຸ້ງຍາກຝືດເຄືອງ ອາດຈະເປັນຍ້ອນຕົນບໍ່ໄດ້ບຳເພັນບຸນກຸສົນ, ບໍ່ມີການໃຫ້ທານ-ຮັກສາສິນ, ບໍ່ຮັບຟັງທຳມະເທດສະໜາຈະເລີນເມດຕາພາວະນາໃນຊາດປາງກ່ອນ ຈຶ່ງເຮັດໃຫ້ຊາດນີ້ ກາຍເປັນຄົນຍາກຈົນເຂັນໃຈໄຮ້ຊັບອັບປັນຍາ ຈຶ່ງລະນຶກຈິດນ້ອມໄປສູ່ບຸນກຸສົນ ເກີດສັດທາເຈຕະນາມີຄວາມຮັກໄຄ່ຈະໃຫ້ທານ ເພື່ອຈະເປັນຊັບສົມບັດວັດຖຸທຳຕິດຕາມໂຕໄປໃນປໍລະພົບເບື້ອງໜ້າ ເມື່ອຄິດໄດ້ດັ່ງນັ້ນ ຈຶ່ງປຶກສານຳເມຍ ແລ້ວເມຍກໍຕອບວ່າເຫັນດີ ແລະ ວັນຕໍ່ມາ ຈຶ່ງໄດ້ພາກັນເຂົ້າປ່າເກັບຜັກຕັດຟືນມາຂາຍ ພໍໄດ້ເປັນມູນຄ່າ ແລ້ວກໍເອົາໄປຊື້ໝໍ້ເຂົ້າໜ່ວຍໜຶ່ງ, ໝໍ້ແກງໜ່ວຍໜຶ່ງ ອ້ອຍ 4 ລຳ, ກວຍ 4 ໜ່ວຍ ນຳມາຈັດແຈງແຕ່ງເຄື່ອງໄທຍະທານສຳເລັດ ແລ້ວຈຶ່ງເຂົ້າໄປສູ່ອາຣາມ ເຮັດເປັນສະຫລາກກະພັດທານ ພ້ອມກັນກັບຜູ້ຄົນອື່ນໆຜົວເມຍຄູ່ນັ້ນຈົກສະຫລາກຖືກພຣະພິກຂຸຮູບໜຶ່ງ ມີຈິດໃຈຍິນດີເປັນອັນຍິ່ງ ຈຶ່ງໄດ້ນ້ອມເອົາສະຫລາກກະພັດທານຂອງຕົນເຂົ້າໄປຖວາຍ ແລ້ວຢາດນ້ຳອຸທິດບຸນກຸສົນລົງສູ່ພື້ນດິນຕັ້ງຈິດປາຖະໜາວ່າ: ດ້ວຍຜົນບຸນກຸສົນຜົນທານດັ່ງກ່າວນີ້ ຂ້າພະເຈົ້າທັງສອງເກີດໃນພົບໃດໆ ໃນຊາດກຳເນີດໃດໆກໍດີ ຂໍຢ່າໄດ້ທຸກຍາກລຳບາກເຂັນໃຈໄຮ້ຊັບອັບປັນຍາ ເໝືອນດັ່ງຊາດນີ້ເທີ້ນ, ສອງຄົນຜົວເມຍດຳລົງຊີວິດຢູ່ພໍສົມຄວນແກ່ອາຍຸໄຂແລ້ວກໍດັບຂັນໄປຕາມສະພາບສັງຂານ ດ້ວຍອານິສົງສະຫລາກພັດຕະທານ ຈຶ່ງໄດ້ໄປເກີດເປັນເທບພະບຸດເທບທິດາ ໃນສະຫວັນຊັ້ນດາວະດຶງສາສະເຫວີຍສົມບັດທິບໃນວິມານຄຳອັນຜຸດຜ່ອງ ອັນມີນາງເທບພະອັບປະສອນແວດລ້ອມເປັນບໍລິວານ ມີນາມວ່າສະຫລາກພັດເທບພະບຸດເທບພະດາ ຄັນຈຸຕິຕາຍຈາກສະຫວັນແລ້ວກໍໄດ້ມາເກີດເປັນກະສັດສະເຫວີຍຣາຊະສົມບັດ ຢູ່ໃນເມືອງພາຣານາສີຊື່ວ່າພະເຈົ້າສັດທາດິດສະເຫວີຍຣາຊະສົມບັດຢູ່ 84,000 ປີ ເມື່ອເບື່ອໜ່າຍຈຶ່ງອອກບວດຈົນຕາຍ ແລະ ໄດ້ເອົາຕົນໄປເກີດໃນພົມມະໂລກ; ຕໍ່ມາກໍໄດ້ມາອຸບັດເປັນພຣະຕະຖາຄົດຂອງເຮົານີ້ເອງ ນີ້ຄືອານິສົງແຫ່ງການຖວາຍສະຫລາກພັດນັບວ່າຍິ່ງໃຫຍ່ໄພສານ.

ພໍເມື່ອຮອດມື້ຂຶ້ນ 15 ຄ່ຳເດືອນສິບລາວຂອງທຸກໆປີ, ພໍ່ແມ່ປະຊາຊົນຊາວລາວ ໂດຍສະເພາະແມ່ນຜູ້ທີ່ນັບຖືສາສະໜາພຸດ ຈະພ້ອມກັນກຽມຈິດກຽມໃຈ ແລະ ຫ້າງຫາກະກຽມ ເຄື່ອງວັດຖຸທານ, ເຂົ້າ, ປາ, ອາຫານຄາວ-ຫວານ, ພຶດຜັກ, ໝາກໄມ້, ຄຳໝາກ-ກອກຢາ ແລະ ອື່ນໆ (ຕາມແຕ່ຫາໄດ້) ແລ້ວນຳເອົາວັດຖຸທັງໝົດນັ້ນ ມາຫໍ່ເປັນຈຸກໃສ່ໃນໃບກ້ວຍ (ເປັນຫໍ່ໃຫຍ່ໆ) ພໍຮອດຕອນເຊົ້າຂອງມື້ຂຶ້ນ 15 ຄ່ຳກໍນຳເອົາວັດຖຸດັ່ງກ່າວໄປວັດ ພ້ອມທັງຂຽນຊື່ ແລະ ນາມສະກຸນຂອງຕົນເອງ ຢ່າງລະອຽດລົງໃສ່ໃນຫໍ່ດັ່ງກ່າວ ແລ້ວຈຶ່ງຖວາຍໃຫ້ແກ່ພະສົງ-ສາມະເນນ, ພ້ອມທັງໃສ່ບາດ-ຢາດນ້ຳ ແລະ ອຸທິດສ່ວນບຸນດັ່ງກ່າວໄປຫາພໍ່ແມ່,ຍາດຕິພີ່ນ້ອງ ແລະ ຜູ້ມີພະຄຸນຕ່າງໆທີ່ລ່ວງລັບໄປແລ້ວ, ສ່ວນຕອນຄ່ຳກໍມີການວຽນທຽນ ຫລື ຟັງເທດສະໜາ ຕາມຮີດຄອງປະເພນີຈຶ່ງຖືວ່າສຳເລັດ. ພ້ອມດຽວກັນນີ້ຫໍ່ສະຫລາກນີ້ ເປັນປະເພນີທີ່ດີງາມ ເພື່ອປະຕິບັດບໍ່ໃຫ້ມີການແບ່ງຊົນຊັ້ນວັນນະໃນສັງຄົມ ເປີດໂອກາດໃຫ້ພະສົງສາມະເນນ ແລະ ຍາດໂຍມທົ່ວໄປໄດ້ມີໂອກາດໄດ້ສ່ຽງສະຫລາກຕາມຄວາມເໝາະສົມຕາມບຸບພະກັມ ຫລື ບຸບເພຈະກະຕະປຸນຍະຕາ ຄືເປັນຜູ້ທີ່ເຮັດບຸນຮ່ວມກັນມາແຕ່ຊາດປາງກ່ອນ ເພາະວ່າບາງຄົນກໍເຄີຍໄດ້ເປັນພີ່ເປັນນ້ອງກັນມາແລ້ວນັບຊາດບໍ່ຖ້ວນ ອີກຢ່າງກໍເພື່ອໃຫ້ເກີດລະບົບທຳມາທິປະໄຕໄປໃນໂຕ ບໍ່ໃຫ້ມີຄວາມເຫລື່ອມລ້ຳຕ່ຳສູງໃນສັງຄົມ.

ບຸນຫໍ່ເຂົ້າສະຫລາກ ແມ່ນຮີດຄອງປະເພນີ ທີ່ພໍ່ແມ່ປະຊາຊົນລາວຊາວພຸດພວກເຮົາເຄີຍປະພຶດປະຕິບັດສືບທອດກັນມາແຕ່ບູຮານນະການຈົນເຖິງທຸກວັນນີ້ ແນວໃດກໍດີເພື່ອເປັນການອະນຸລັກຮັກສາ ແລະ ສືບທອດມູນເຊື້ອວັດທະນະທຳອັນດີງາມນີ້ໄວ້ໃຫ້ຢູ່ຄູ່ກັບຊາດລາວ, ຄົນລາວຕະຫລອດໄປ ແລະ ຮຽກຮ້ອງມາຍັງທຸກພາກສ່ວນໃນສັງຄົມ ໂດຍສະເພາະແມ່ນຄົນຮຸ່ນໜຸ່ມ ຈົ່ງພ້ອມກັນເອົາໃຈໃສ່ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມດັ່ງກ່າວນີ້ ໃຫ້ຄົງຢູ່ສືບຕໍ່ໄປ.

---

ສາລາກະວີ

**ບົດກະວີຈາກ ສສ.ຫວຽດນາມ**

ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022)

## ດາວຮຸ່ງພຸ່ງພົ້ນ

\# ໂດຍ: ຕົນ ຮຸງ

✻ ທ່ານຖື ພົ້ວດອກໄມ້  
ແລ້ວກໍ ເລີຍປັກໝຸດ  
ບິນສາຍທາງແສນຫຍຸ້ງ  
ຄວາມຊົງຈຳຊວດຟື້ນ

ຕາເວັນຊໍ່ສີຂາວ  
ໃບໄມ້ເຫລືອງຫລາຍລົ້ນ  
ກັນດານສຸດລຳບາກ  
ຄືນແຫ່ງສີຟ້າເຂັ້ມ  
ຄະນຶງແລ້ວປ່ຽມທີ່ໃຈ

✻ ແນມເບິ່ງ ລົດຖີບຮ້າງ  
ເຈົ້າໄປໃສກຳລັງມາ  
ເບິ່ງແມ ແພຜືນຜ້າ  
ປານນີ້ ຄົງຫ່ອນແຫ້ງ

ກຳແພງເກົ່າເອນອີງ  
ຂວບເວລານານເນີ້ນ  
ພູສາທີ່ປອນປຽກ  
ຕາເວັນຂຶ້ນແຜດເຜົາ ໝົດແລ້ວ!

✻ ຂ້ອຍນີ້ ນອນເຫລົ່າເຝົ້າ  
ເຫັນເຈົ້າ ຜອມຜາງໂຊ  
ແຖມວ່າ ປືນເປີດ້ວຍ  
ທັງຫົ່ມເສື້ອຂາດກົ້ນ

ລະເມີໃຝ່ແຝງຝັນ  
ຈ່ອຍແຮງຄົງແຫ້ງ  
ໂລຫິດໄຫລນອງຫລັ່ງ  
ຍິນສະທ້ອນຄິດອີ່ດູ ເດນໍ!

✻ ມື້ນີ້ ໄດ້ພົບໜ້າ  
ຂ້ອຍກໍ ແລເລັງເຫັນ  
ຟັງເບິ່ງ ຄຳສະເໜີເວົ້າ  
ບັດນີ້ ທົ່ວປະເທດທ້ອງຟ້າ

ເຈົ້າຂານຄອບຄວາມຈິງ  
ແກ່ນໃຈຕົນເຈົ້າ  
ຄື "ດາວແດງ" ເຜັງພຸ່ງ  
ຊົງາມແຈ້ງແຈ່ມສະໄໝ ແທ້ແລ້ວ!

---



ສຸກສະບາຍຫາຍໂຣຄາ

# ນັ່ງໃຊ້ຄອມພິວເຕີດົນເກີນໄປ ສິ່ງຜົນກະທົບຕໍ່ສຸຂະພາບ

ແປ ແລະ ຮຽບຮຽງໂດຍ: ຫອມສະນິດ

ການນັ່ງເຮັດວຽກຢ່າງຕໍ່ເນື່ອງເປັນເວລາດົນຈົນເກີນໄປ ໂດຍບໍ່ໄດ້ມີການໜັງຕິງ ຫລື ລຸກອອກໄປທາງໃດເລີຍ ເປັນໜຶ່ງສາເຫດ ຂອງອາການເລືອດແຂງໂຕເປັນກ້ອນ ນັກວິໄຈປະເທດນິວຊີແລນ ພົບວ່າ ການນັ່ງເຮັດວຽກຫລາຍຊົ່ວໂມງຕິດຕໍ່ກັນ ອາດຈະເຮັດໃຫ້ເລືອດແຂງຕົວເປັນກ້ອນ ເຊິ່ງເປັນອັນຕະລາຍເຖິງແກ່ຊີວິດໄດ້ ອາການນີ້ເອີ້ນກັນວ່າ: ອາການເລືອດກ້າມຢູ່ເສັ້ນເລືອດດຳ ເຮັດໃຫ້ເລືອດໄຫລວຽນບໍ່ສະດວກ (DEEP VEIN THROMBOSIS) ເຊິ່ງມັກເກີດຢູ່ບໍລິເວນຂາ ຈາກການນັ່ງຢ່ອນຂາເປັນເວລາດົນ ແລະ ມັກຈະເກີດຂຶ້ນເວລາມີເລືອດຊຸ້ນຢູ່ໃນເສັ້ນເລືອດດຳ ມັນຈະຄ່ອຍໆ ປ່ຽນຕົວມັນເອງໄປເປັນກ້ອນເລືອດ ເຊິ່ງຈະສາມາດສັງເກດເຫັນໄດ້ຢ່າງຈະແຈ້ງຄື: ຂາຈະເລີ່ມມີອາການບວມ, ສ່ວນອາການທີ່ອັນຕະລາຍຈະເກີດຂຶ້ນ ເມື່ອມີເລືອດແຕກອອກ ແລະ ແລ່ນໄປເຖິງຫົວໃຈ ຫລື ອະໄວຍະວະພາຍໃນທີ່ສຳຄັນຂອງຮ່າງກາຍ ເຊິ່ງບໍ່ສາມາດຄາດຄະເນ ຫລື ຄາດເດົາເອົາໄດ້.

ສະນັ້ນ, ບໍ່ຄວນນັ່ງເຮັດວຽກ ຫລື ຫລິ້ນຄອມພິວເຕີ ນານຈົນເກີນໄປ ຖ້າຫລີກເວັ້ນບໍ່ໄດ້ ໃຫ້ພະຍາຍາມເໜັງຕິງ ແລະ ເຄື່ອນໄຫວຂໍ້ຕີນຂໍ້ມື ພ້ອມທັງດື່ມນ້ຳໃຫ້ຫລາຍ; ພ້ອມນັ້ນ, ກໍຄວນຈະລຸກຂຶ້ນຢຽດແຂນ-ຂາຊົ່ວໂມງລະເທື່ອ ພ້ອມທັງນັ່ງເຮັດວຽກໃນທ່າທີ່ຖືກຕ້ອງເໝາະສົມຈະເຮັດໃຫ້ສາມາດຫລຸດຜ່ອນຄວາມສ່ຽງລົງໄດ້.



# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 30 (ປັບປຸງ) ການໂຄສະນາ ແລະ ສຸຂະສຶກສາ**

ການໂຄສະນາ ແລະ ສຸຂະສຶກສາ ແມ່ນ ວິທີການປຸກລະດົມ, ໃຫ້ຄວາມຮູ້, ສະໜອງຂໍ້ມູນ ຂ່າວສານ ດ້ານວິທະຍາສາດ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງໂດຍຜ່ານສື່ມວນຊົນ ແລະ ວິທີການອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໂຄສະນາ ແລະ ສຸຂະສຶກສາ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ທົ່ວສັງຄົມ ໂດຍສະເພາະ ແມ່ຍິງ, ເດັກ, ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ເພື່ອໃຫ້ຫ່າງໄກຈາກການຊົມໃຊ້ຢາສູບ.

**ມາດຕາ 31 (ປັບປຸງ) ການເຂົ້າເຖິງ ຂໍ້ມູນ ຂ່າວສານ**

ພົນລະເມືອງທຸກຄົນ ມີສິດເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນ ຜົນຮ້າຍຂອງການສູບຢາ ແລະ ການໄດ້ຮັບຄວັນຢາສູບມືສອງ, ຜົນດີຂອງການບໍ່ສູບຢາ, ການອອກຢາສູບ ແລະ ສິ່ງແວດລ້ອມທີ່ປອດຄວັນຢາສູບ.

**ໝວດທີ 2**
**ສະຖານທີ່ຫ້າມສູບຢາ**

**ມາດຕາ 32 (ປັບປຸງ) ສະຖານທີ່ຫ້າມສູບຢາທັງພາຍໃນ ແລະ ນອກອາຄານ**

ສະຖານທີ່ຫ້າມສູບຢາທັງພາຍໃນ ແລະ ນອກອາຄານ ມີ ດັ່ງນີ້:

1. ສະຖານທີ່ບໍລິການສາທາລະນະສຸກ;
2. ສະຖານການສຶກສາ;
3. ສະຖານທີ່ຫຼິ້ນກິລາ;
4. ພາຍໃນພາຫະນະໂດຍສານສາທາລະນະທາງບົກ, ທາງນໍ້າ ແລະ ທາງອາກາດ;
5. ສະຖານທີ່ມີເຊື້ອໄຟ ແລະ ວັດຖຸອັນຕະລາຍ;
6. ສວນສາທາລະນະ, ຫໍພິພິທະພັນ, ຫໍວັດທະນະທຳ, ໂຮງມະຫໍລະສົບ, ໂຮງລະຄອນ, ໂຮງກາຍະສິນ, ໂຮງຮູບເງົາ, ສາສະນະສະຖານ, ປູສະນີຍະສະຖານ, ອະນຸສອນສະຖານ ແລະ ສະໂມສອນ;
7. ສະຖານທີ່ອື່ນ ທີ່ມີປ້າຍຫ້າມສູບຢາ ແລະ ສະຖານທີ່ປອດຄວັນຢາສູບ.

**ມາດຕາ 33 (ປັບປຸງ) ສະຖານທີ່ຫ້າມສູບຢາສະເພາະພາຍໃນອາຄານ**

ສະຖານທີ່ຫ້າມສູບຢາສະເພາະພາຍໃນອາຄານ ມີ ດັ່ງນີ້:

1. ສຳນັກງານຂອງລັດ ແລະ ເອກະຊົນ;
2. ຕຶກອາຄານຢູ່ໃນສະຖານີລົດໂດຍສານ, ລົດໄຟ, ສະໜາມບິນ, ທ່າເຮືອ ແລະ ສະຖານທີ່ສ່ວນລວມອື່ນ;
3. ສູນການຄ້າ, ຮ້ານສັບພະສິນຄ້າ, ຕະຫຼາດ ແລະ ຮ້ານຂາຍເຄື່ອງທົ່ວໄປ;
4. ຕຶກອາຄານຢູ່ໃນສະຖານທີ່ທ່ອງທ່ຽວ, ສວນສັດ ແລະ ຊຸມຊົນແອອັດ;
5. ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ຮ້ານກິນດື່ມ, ຮ້ານຄາລາໂອເກະ ແລະ ຮ້ານບັນເທີງ;
6. ຮ້ານນວດ, ສະປາ, ຮົມຢາ, ຕັດຜົມ ແລະ ເສີມສວຍ;
7. ສະຖານທີ່ອື່ນ ຕາມການກຳນົດຂອງລັດຖະບານ ແລະ/ຫຼື ເຈົ້າຂອງສະຖານທີ່.

ສະຖານທີ່ດັ່ງກ່າວເທິງນີ້ ຕ້ອງຈັດສັນໃຫ້ມີບ່ອນສູບຢາສະເພາະຢູ່ນອກອາຄານ ຊຶ່ງຫ່າງຈາກຕົວອາຄານ ຢ່າງໜ້ອຍ ສິບແມັດ ໂດຍກຳນົດເນື້ອທີ່ບໍ່ເກີນຫ້າ ຕາແມັດ, ມີຖາດເຂ່ຍຂີ້ກອກຢາ ແລະ ບໍ່ໃຫ້ມີຫຼັງຄາ.

ສະຖານທີ່ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ເຈົ້າຂອງສະຖານທີ່ສາມາດກຳນົດໃຫ້ເປັນສະຖານທີ່ຫ້າມສູບຢາ ທັງພາຍໃນ ແລະ ນອກອາຄານ ກໍໄດ້.

**ພາກທີ V**
**ການແກ້ໄຂຜົນຮ້າຍຂອງຢາສູບ**

**ມາດຕາ 34 (ປັບປຸງ) ການປຸກລະດົມໃຫ້ອອກຢາສູບ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ປຸກລະດົມໃຫ້ຜູ້ສູບຢາ ຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາສູບ ຕໍ່ ຕົນເອງ, ຄອບຄົວ, ສັງຄົມ ແລະ ເສດຖະກິດ ເພື່ອໃຫ້ຜູ້ກ່ຽວຫຼຸດຜ່ອນ ແລະ ອອກຢາສູບ.

**ມາດຕາ 35 ການບຳບັດ ແລະ ປິ່ນປົວ**

ຜູ້ຕິດຢາສູບ, ຜູ້ໄດ້ຮັບຜົນຮ້າຍຈາກຢາສູບ ຕ້ອງສະໝັກໃຈຕື່ນຕົວບຳບັດ ແລະ ປິ່ນປົວ ດ້ວຍການເອົາໃຈໃສ່ ແລະ ຊ່ວຍເຫຼືອຈາກ ຄອບຄົວ, ຊຸມຊົນ, ສັງຄົມ ແລະ ໂຮງໝໍ.

**ມາດຕາ 36 (ປັບປຸງ) ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ**

ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ມີ ດັ່ງນີ້:

1. ອະທິບາຍ, ຊີ້ແຈງຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ;
2. ແນະນຳຜົນດີຂອງການບໍ່ຊົມໃຊ້ຢາສູບ, ໃຫ້ຄຳປຶກສາ ແລະ ແນະ

ອ່ານຕໍ່ສະບັບໜ້າ...




## ຢ່າລົ້ນຫລົ້ນກັບຄວາມຮັກ

**ໂດຍ: ດົ້ນກົບເມກ**

ຜູ້ຂຽນຕິດຕາມເບິ່ງສະພາບຂ່າວສານທາງສັງຄົມ ເມື່ອອາທິດຜ່ານມາໄດ້ເຫັນຂ່າວການຕາມາເອົາລູກຄືນຂອງເມຍ ຈົນພາໃຫ້ເກີດເລື່ອງສັບສົນວຸ້ນວາຍເປັນທີ່ສົນໃຈຂອງສັງຄົມ ເພາະຝ່າຍຜົວຄືງບໍ່ຍອມງ່າຍໆ ເຊິ່ງສັງເກດໄດ້ວ່າບັນຫາການຢ່າຮ້າງ-ບັນຫາຜິດຖຽງກັນລະຫວ່າງຜົວ-ເມຍໃນຄອບຄົວຍັງຄົງເປັນບັນຫາບໍ່ຈົບສິ້ນງ່າຍ.

ການພົບຮັກ ຫລື ການໃຊ້ຊີວິດຄູ່ນັ້ນບາງຄົນອາດຕັດສິນໃຈສ້າງຄອບຄົວດ້ວຍກັນຫລາຍເຫດຜົນແຕກຕ່າງກັນ ບາງຄູ່ແຕ່ງງານເພາະເງື່ອນໄຂຂອງສັງຄົມທີ່ມີການຈັດຕັ້ງທັງສອງຝ່າຍຈັດໃຫ້ ແຕ່ບາງຄູ່ແຕ່ງງານກັນເພາະຄວາມຈຳເປັນທາງເສດຖະກິດ ແລະ ບາງຄູ່ແຕ່ງງານກັນເພາະຫລົງຮັກໃນຄຳວ່າຜິດສະຫວາດ ແຕ່ພໍເຖິງເວລາໝົດໃຈກໍສາມາດເລີກລາກັນຢ່າງງ່າຍດາຍ, ຍັງມີອີກຄູ່ໜຶ່ງທີ່ຄົບ ແລະ ຢູ່ດ້ວຍກັນແບບຜົວເມຍແຕ່ບໍ່ໄດ້ຈົດທະບຽນສົມລົດ ເພາະທັງສອງຝ່າຍພໍໃຈຢູ່ນຳກັນແບບນັ້ນ.

ສຳລັບຄູ່ທີ່ຢູ່ນຳກັນແບບບໍ່ຈົດທະບຽນສົມລົດຖືກຕ້ອງຕາມລະບຽບກົດໝາຍກໍມີທັງລັກສະນະດີ ແລະ ບໍ່ດີ ຜູ້ຂຽນຂໍຍົກຕົວຢ່າງລັກສະນະທີ່ມີບັນຫາໃຫ້ສັງຄົມໄດ້ອ່ານພິຈາລະນານຳກັນ ເພາະວ່າທັງຝ່າຍຊາຍ ແລະ ຍິງ ຄົງມີລັກສະນະລົດນິຍົມໃກ້ກັນ ຈຶ່ງສາມາດຢູ່ກິນນຳກັນໄດ້, ຄູ່ແບບນີ້ຈະມີນິດໃສຄ້າຍກັນ ບາງທີຜົວມັກກິນເຫລົ້າ-ເບຍ, ຫລິ້ນໄພ້ ຝ່າຍເມຍກໍມັກຄືກັນ ເລີຍເຂົ້າກັນໄດ້, ບາງຄູ່ກໍປະຮ້າງຜົວເກົ່າ-ເມຍເກົ່າແບບບໍ່ໄດ້ເຊັ່ນຂາດຢ່າຮ້າງ ແຕ່ກໍມາເອົາໃໝ່ແບບບໍ່ຖືກຕ້ອງຕາມກົດໝາຍ ບັນຫາຈຶ່ງເກີດຕາມມາຫລາຍແບບ.

ບັນຫາຄູ່ບໍ່ຖືກລະບຽບກໍສາມາດປະຮ້າງກັນໄດ້ສະບາຍແຕ່ເປັນບັນຫາໃຫ້ສັງຄົມ ຖ້າວ່າເກີດມີລູກອອກມາ ແນ່ນອນຄວາມຮັກອາດເລືອກບໍ່ໄດ້ ແຕ່ເຮົາສາມາດເຮັດໃຫ້ຊີວິດຖືກຕ້ອງໄດ້ ຖ້າວ່າບໍ່ເຫັນແກ່ມ່ວນສະໜຸກສະໜານຢ່າງດຽວ.




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພົມັດເສລີ**

27. ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໝາຍເຖິງ ຄຳຕັດສິນ, ຄຳພິພາກສາຂອງສານ ເຊິ່ງຄູ່ຄວາມບໍ່ຂໍອຸທອນ, ບໍ່ຂໍລົບລ້າງ ຫລື ຫົວໜ້າອົງການໄອຍະການ ບໍ່ສະເໜີຄັດຄ້ານຄຳຕັດສິນ ແລະ ຄຳພິພາກສາ;

28. ຄຳຕົກລົງຂອງຫົວໜ້າອົງການໄອຍະການ ໝາຍເຖິງ ຄຳສະເໜີຄັດຄ້ານ, ຕົກລົງບໍ່ຄັດຄ້ານ, ຄຳຕົກລົງບໍ່ຮື້ຟື້ນ, ຄຳຕົກລົງລົບລ້າງ;

## ສະເຫລີມສະຫລອງ...

(ສພຊ) ສະຖານເອກອັກຄະລັດຖະທູດ ແຫ່ງ ສສ.ຫວຽດນາມ ປະຈຳ ສປປລາວ ໄດ້ຈັດງານລ້ຽງ ເພື່ອສະເຫລີມສະຫລອງວັນຊາດ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 77 ປີ (2/9/1945-2/9/2022) ແລະ ປີສາມັກຄີມິດຕະພາບ ລາວ-ຫວຽດນາມ 2022 ຂຶ້ນໃນວັນທີ 2 ກັນຍາ 2022 ຢູ່ໂຮງແຮມເມືອງແທ້ງ ນະຄອນຫລວງວຽງຈັນ ໂດຍການເຂົ້າຮ່ວມຂອງສະຫາຍໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ ປະທານສະພາແຫ່ງຊາດ, ສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ, ສະຫາຍ ສະເຫລີມໄຊ ກົມມະສິດ ກຳມະການກົມການເມືອງສູນກາງພັກ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ, ມີພາກສ່ວນກ່ຽວຂ້ອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ສະຫາຍ ຫງວຽນ ບ໋າ ຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປລາວ ໄດ້ກ່າວວ່າ: ກ່ອນໜ້ານີ້ 77 ປີ, ປະຊາຊົນຫວຽດນາມ ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ ສາມາດຍາດໄດ້ໄຊຊະນະໃນການປະຕິວັດເດືອນສິງຫາ, ເອົາອຳນາດການປົກຄອງມາສູ່ກຳມືຂອງປະຊາຊົນ; ຫວຽດນາມໄດ້ຜ່ານເສັ້ນທາງ 30 ປີ ແຫ່ງການຕໍ່ສູ້ລຳບາກຍາກເຂັນ ເພື່ອປົກປ້ອງເອກະລາດ, ປົດປ່ອຍປະເທດຊາດ, ທ້ອນໂຮມປະເທດຊາດເປັນອັນໜຶ່ງອັນດຽວ ແລະ ຂ້າມຜ່ານ 47 ປີ ແຫ່ງການທັງສ້າງສາ ແລະ ພັດທະນາປະເທດຊາດ, ທັງປົກປັກຮັກສາອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະ ຊີວິດການເປັນຢູ່ຂອງປະຊາຊົນມີຄວາມສະຫງົບປອດໄພ. ບົນເສັ້ນທາງ 77 ປີຜ່ານມາ, ຫວຽດນາມຍາມໃດກໍໄດ້ຮັບການບິແບ່ງ, ສະໜັບ ສະໜູນ ແລະ ຊ່ວຍເຫລືອອັນໃຫຍ່ຫລວງທັງດ້ານຈິດໃຈ ແລະ ວັດຖຸ ຈາກບັນດາປະເທດໃນໂລກ ແລະ ຈາກຫລາຍອົງການຈັດຕັ້ງສາກົນແລະພາກພື້ນ. ປະຊາຊົນຫວຽດ ນາມຍາມໃດກໍຈາລຶກ ແລະ ສະແດງຄວາມຮູ້ບຸນຄຸນຕໍ່ເພື່ອນມິດຫວຽດນາມ. ຕະຫລອດເວລາກວ່າ 2 ປີການແຜ່ລະບາດຂອງພະຍາດໂຄວິດ-19 ດ້ວຍຄວາມທຸ່ມເທສຸດກຳລັງ ຢ່າງໜ້າປະທັບໃຈ, ຫວຽດນາມແມ່ນໜຶ່ງໃນສາມປະເທດທີ່ມີອັດຕາການສັກວັກຊິນສູງກວ່າໝູ່ໃນໂລກ ແລະ ເປັນໜຶ່ງໃນບໍ່ພໍເທົ່າໃດປະເທດຢູ່ທະວີບອາຊີທີ່ມີການເຕີບໂຕດ້ານເສດຖະກິດເປັນບວກ ດ້ວຍລະດັບສະເລ່ຍໃນ 2 ປີ ແມ່ນເກືອບ 2%, ສ້າງທ່ອງທ່າໃຫ້ແກ່ຫວຽດນາມເປີດປະເທດໃນຕົ້ນປີ 2022, ເຮັດໃຫ້ກິດຈະ ກຳທາງເສດຖະກິດ ກັບຄືນສູ່ສະພາບປົກກະຕິຄືດັ່ງເວລາກ່ອນມີການແຜ່ລະບາດຂອງພະຍາດໂຄວິ-19 ເຊິ່ງໃນ 7 ເດືອນຕົ້ນປີ 2022 ການເຕີບໂຕ GDP ບັນລຸກວ່າ 6%; ມູນຄ່າການນຳເຂົ້າ-ສົ່ງອອກສິນຄ້າບັນລຸ 431,94 ຕື້ໂດລາ (ເພີ່ມ 14,8% ທຽບໃສ່ໄລຍະດຽວກັນຂອງປີ 2021), ມີນັກທ່ອງທ່ຽວສາກົນເຂົ້າມາຫວຽດນາມ ເກືອບ 1 ລ້ານເທື່ອຄົນ (ເພີ່ມຂຶ້ນຫລາຍກວ່າ 10 ເທົ່າເມື່ອທຽບໃສ່ໄລຍະດຽວກັນໃນປີ 2021) ແລະ ນັກທ່ອງທ່ຽວພາຍໃນກໍເພີ່ມຂຶ້ນ, ການລົງທຶນໂດຍກົງຂອງຕ່າງປະເທດບັນລຸ 11,57 ຕື້ໂດລາ (ເພີ່ມ 10,2%), ລັດຖະບານສາມາດຄວບຄຸມອັດຕາເງິນເຟີ້ໄດ້ເປັນຢ່າງດີ ແລະ ເຮັດໃຫ້ລາຄານໍ້າມັນເຊື້ອໄຟສະຫງົບເຂົ້າສູ່ພາວະປົກກະຕິຢ່າງວ່ອງໄວ.

ສະຫາຍ ເອກອັກຄະລັດຖະທູດ ຫວຽດນາມ ປະຈຳລາວ ຍັງໄດ້ກ່າວວ່າ: ປີນີ້, ຫວຽດນາມສະເຫລີມສະຫລອງວັນຊາດ ທ່າມກາງບັນຍາກາດອັນຟົດຟື້ນຂອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ. ແຕ່ຕົ້ນປີມາເຖິງປັດຈຸບັນ, ໃນທົ່ວປະເທດລາວ ແລະ ຫວຽດນາມ ໄດ້ຈັດຂຶ້ນເປັນຫລາຍຮ້ອຍກິດຈະກຳ ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດຄົບຮອບ 60 ປີ (5/9/1962) ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືຄົບຮອບ 45 ປີ (18/7/1977); ຜ່ານບັນດາກິດຈະກຳດັ່ງກ່າວນີ້, ຄວາມສາມັກຄີພິເສດ ຫວຽດນາມ-ລາວ, ລາວ-ຫວຽດ ນາມ ນັບມື້ນັບກ້າວເຂົ້າສູ່ລວງເລິກ, ເຊື່ອມຊຶມເຂົ້າຢ່າງເລິກເຊິ່ງ ໃນທຸກຊັ້ນຄົນຂອງສອງປະເທດ.

ພ້ອມນີ້, ສະຫາຍ ຍັງໄດ້ຕາງໜ້າພັກ, ລັດ ແລະ ປະຊາຊົນຫວຽດນາມສະແດງຄວາມຮູ້ບຸນຄຸນຕໍ່ພັກ, ລັດ ແລະ ປະຊາຊົນລາວອ້າຍນ້ອງຍາມໃດກໍສາມັກຄີ, ສະໜັບ ສະໜູນ ແລະ ຊ່ວຍເຫລືອຫວຽດນາມ. ຫວຽດນາມສະແດງຄວາມຂອບອົກຂອບໃຈ ແລະ ຫວັງຢ່າງຍິ່ງວ່າບັນດາປະເທດຈະສືບຕໍ່ສະໜັບສະໜູນສາຍພົວພັນ ແລະ ການຮ່ວມມືລະຫວ່າງຫວຽດນາມ-ລາວ ເພື່ອການພັດທະນາຢ່າງຍືນຍົງ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງປະຊາຄົມອາຊຽນ, ຮັກສາສັນຕິພາບ, ຄວາມສະຫງົບ, ຄວາມໝັ້ນຄົງ ແລະ ການຮ່ວມມືໃນສາກົນ.

ໂອກາດທີ່ສຳຄັນນີ້, ສະຫາຍ ສະເຫລີມໄຊ ກົມມະສິດ ໄດ້ຮັບມອບໝາຍໃຫ້ຕາງໜ້າພັກ-ລັດ ກ່າວປາໄສ ເຊິ່ງມີເນື້ອໃນສຳຄັນບາງຕອນວ່າ: ພັກ, ລັດ ແລະ ປະຊາຊົນລາວ ສຸດທີ່ຍິນດີ ແລະ ຊົມເຊີຍຢ່າງອົບອຸ່ນ ຕໍ່ບັນດາໄຊຊະນະ ແລະ ຜົນສຳເລັດອັນໃຫຍ່ຫລວງ, ຮອບດ້ານ ທີ່ມີຄວາມໝາຍປະຫວັດສາດຂອງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ໃນໄລຍະ 77 ປີຜ່ານມາ. ໄຊຊະນະ ແລະ ຜົນສຳເລັດດັ່ງກ່າວນີ້ ແມ່ນແຫລ່ງກຳລັງໃຈ ແລະ ເປັນກຳລັງຊຸກຍູ້ຢ່າງແຂງແຮງ ໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ສະຫາຍ ສະເຫລີມໄຊ ກົມມະສິດ ຍັງໄດ້ຕາງໜ້າໃຫ້ພັກ, ລັດ ແລະ ປະຊາຊົນລາວ ສະແດງຄວາມຂອບອົກຂອບໃຈຢ່າງເລິກເຊິ່ງຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມ ທີ່ໄດ້ໃຫ້ການຊ່ວຍເຫລືອໃນທົ່ວປະເທດລາວໃນໄລຍະແຫ່ງການຕໍ່ສູ້ປົດປ່ອຍປະເທດຊາດ ກໍຄືຍຸກປັດຈຸບັນແຫ່ງການກໍ່ສ້າງ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ. ພ້ອມທັງຢືນຢັນວ່າ: ບໍ່ວ່າສະຖານະການພາກພື້ນ ແລະ ໂລກຈະຜັນແປໄປຢ່າງສະຫລັບຊັບຊ້ອນຄືແນວໃດ ພັກ, ລັດ ແລະ ປະຊາຊົນລາວ ຈະເຮັດຈົນສຸດຄວາມສາມາດພ້ອມກັບບັນດາສະຫາຍຫວຽດນາມ ເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອສາມັກຄີແບບພິເສດຂອງສອງປະເທດ ລາວ-ຫວຽດນາມ ໃຫ້ມີຄວາມໝັ້ນຄົງທະນົງແກ່ນຕະຫລອດໄປ.

# ຈີນ ຮັບຮອງເອົາວັກຊີນໂຄວິດແບບສູບດົມ

ແປ ແລະ ຮຽບຮຽງ: ທະນາພອນ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ບໍລິສັດ CanSino Biologics ເຊິ່ງເປັນໜຶ່ງໃນຜູ້ໃຫ້ບໍລິການດ້ານຊີວະວິທະຍາລາຍໃຫຍ່ທີ່ສຸດຂອງຈີນ ໄດ້ອອກຖະແຫລງການໃນວັນອາທິດທີ 4 ກັນຍາ 2022 ວ່າ: ວັກຊີນໂຄວິດ-19 ແບບສູບດົມ ທີ່ບໍລິສັດໄດ້ຄິດຄົ້ນ ແລະ ພັດທະນາຂຶ້ນເອງ ໄດ້ຮັບການຮັບຮອງຈາກອົງການການຢາແຫ່ງຊາດຈີນ(NMPA)ສຳເລັດແລ້ວ.

ຢ່າງໃດກໍຕາມ, ຍັງບໍ່ຈະແຈ້ງວ່າ ເມື່ອໃດທີ່ຢາວັກຊີນດັ່ງກ່າວຈະມີອອກສູ່ຕະຫລາດ ເນື່ອງຈາກວ່າຍັງຕ້ອງຜ່ານການພິຈາລະນາເພີ່ມເຕີມ ແລະ ການອະນຸມັດຈາກຫລາຍພາກສ່ວນຕື່ມອີກ, ໃນຂະນະທີ່ອັດຕາການສັກຢາປ້ອງກັນ ໂຄວິດ-19 ພ້ອມກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ທັງໃນ ແລະ ຕ່າງປະເທດຍັງເປັນຕົວແປທີ່ສຳຄັນ.

ທັງນີ້, ຫລັກການພື້ນຖານສຳລັບວັກຊີນໂຄວິດ-19 ແຄນຊີໂນປະກອບດ້ວຍຈອກພາລາສະຕິກສຳລັບສູບດົມລະອອງອາຍຂອງຢາ ເຊິ່ງຈະອອກມາຈາກເຄື່ອງສູບປະມານ 10 ວິນາທີຫລັງຈາກກົດປຸ່ມ. ຈາກນັ້ນ, ຜູ້ໃຊ້ຈະສູບລະອອງອາຍເຂົ້າໄປ ແລະ ກັ້ນຫາຍໃຈປະມານ 5 ວິນາທີ ຖືວ່າສຳເລັດການຮັບວັກຊີນ.

ໃນເດືອນພຶດສະພາຜ່ານມາ, ອົງການອະນາໄມໂລກ (WHO) ໄດ້ລົງທະບຽນເປັນສຸກເສີນໃຫ້ວັກຊີນປ້ອງກັນພະຍາດໂຄວິດ-19 ທີ່ເປັນໄວຣັດເວັກເຕີ ຄອນວິດີເຊຍ ຂອງບໍລິສັດ CanSino Biologics ເຊິ່ງ WHO ປະເມີນປະສິດທິພາບຂອງວັກຊີນຄອນວິດີເຊຍ ທີ່ເປັນການສັກຢາເຂັ້ມດຽວ ແມ່ນ 92% ໃນການຫລຸດຜ່ອນຄວາມຮ້າຍແຮງຂອງພະຍາດໂຄວິດ-19 ແລະມີປະສິດທິພາບ 64% ໃນການປ້ອງກັນການສະແດງອາການເຈັບປ່ວຍ.

ວັກຊີນຄອນວິດີເຊຍ ແມ່ນວັກຊີນໂຄວິດ-19 ລາຍທີ 11 ທີ່ໄດ້ຮັບການອະນຸມັດຈາກ WHO ເປັນກໍລະນີສຸກເສີນ ແລະ ຍັງເປັນວັກຊີນທີ 3 ຈາກປະເທດຈີນທີ່ WHO ໄດ້ຂຶ້ນທະບຽນ ຕໍ່ຈາກຊີໂນຟາມ ແລະ ຊີໂນແວັກ ເຊິ່ງແມ່ນວັກຊີນໂຄວິດ-19 ແບບເຊື້ອຕາຍທັງສອງ.

**ແຫລ່ງຂ່າວ: Daily News**











# ອີຢູ ພິຈາລະນາກົດໝາຍບັງຄັບໃຫ້ຜະລິດສະມາດໂຟນ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ຄະນະກຳມະການເອີລົບພວມພິຈາລະນາຮ່າງກົດໝາຍໃໝ່ທີ່ຫາກໍໄດ້ຮັບການສະເໜີ ເພື່ອຊອກຫາຄວາມເປັນໄປໄດ້ທີ່ຈະບັງຄັບໃຫ້ຜູ້ຜະລິດໂທລະສັບສະມາດໂຟນ ແລະ ແທັບເລັດ ຕ້ອງຜະລິດອຸປະກອນທີ່ມີຄວາມທົນທານຫລາຍຂຶ້ນ ແລະ ປ່ຽນຊິ້ນສ່ວນໄດ້ງ່າຍກວ່າຜ່ານມາ.

ຮ່າງກົດໝາຍໃໝ່ນີ້ ມີຈຸດປະສົງເພື່ອຈຳກັດປະລິມານຂີ້ເຫຍື້ອເອເລັກໂຕຣນິກ ແລະ ຖ້າຮ່າງກົດໝາຍສະບັບນີ້ໄດ້ຮັບການອະນຸມັດ ຄະນະກຳມະການເອີຣົບຈະສາມາດຫລຸດຜ່ອນການປ່ອຍກາກບອນໄດ້ເທົ່າກັບລົດໃຫຍ່ ຈຳນວນ 5 ລ້ານຄັນຢູ່ຕາມທົນທາງ.

ຮ່າງກົດໝາຍດັ່ງກ່າວ ແມ່ນເນັ້ນໜັກກ່ຽວກັບການປ່ຽນຊິ້ນສ່ວນຕ່າງໆ ເຊິ່ງຜູ້ຜະລິດຕ້ອງຕອບສະໜອງສ່ວນປະກອບທີ່ຈຳເປັນຢ່າງໜ້ອຍ 15 ຢ່າງ ສຳລັບອຸປະກອນແຕ່ລະເຄື່ອງໃນໄລຍະເວລາ 5 ປີ ນັບແຕ່ເລີ່ມຈຳໜ່າຍ ໂດຍຊິ້ນສ່ວນດັ່ງກ່າວລວມທັງແບັດເຕີລີ, ໜ້າຈໍ, ເຄື່ອງສາກ, ຝາຫລັງ, ກາດໜ່ວຍຄວາມຈຳ, ແຜ່ນຊິມ ແລະ ອື່ນໆ.

ບໍ່ພຽງແຕ່ເທົ່ານັ້ນ ຮ່າງກົດໝາຍສະບັບນີ້ຍັງຮຽກຮ້ອງໃຫ້ຜູ້ຜະລິດຮັບປະກັນວ່າແບັດເຕີລີທີ່ໃຊ້ໃນແຕ່ລະໜ່ວຍຈະສາມາດບັນຈຸຢ່າງໜ້ອຍ 80% ພາຍຫລັງການສາກໄຟ 1.000 ຄັ້ງ ຫລືສາມາດສະໜອງອຸປະກອນແຕ່ລະເຄື່ອງເປັນເວລາ 5 ປີ. ພ້ອມນັ້ນ, ຊອບແວແມ່ນຕ້ອງບໍ່ມີການດຳເນີນງານທີ່ມີຜົນກະທົບທາງລົບຕໍ່ຄຸນນະພາບຂອງແບັດເຕີລີ ແຕ່ກົດໝາຍເຫລົ່ານີ້ບໍ່ໄດ້ກວມເອົາອຸປະກອນຄວາມປອດໄພ ແລະ ອຸປະກອນໜ້າຈໍພັບໄດ້.

ຖ້າຮ່າງກົດໝາຍດັ່ງກ່າວຜ່ານການເຫັນດີຮັບຮອງໄດ້ແລ້ວ ຄະນະກຳມະການກ່ຽວຂ້ອງຈະດຳເນີນການໃນລັກສະນະດຽວກັນກັບອຸປະກອນອື່ນໆ ເຊັ່ນ ໂທລະພາບ, ຈັກຊັກເຄື່ອງ ແລະ ເຄື່ອງໃຊ້ໄຟຟ້າໃນຄົວເຮືອນ ແລະ ອື່ນໆ.

**ແຫລ່ງຂ່າວ: Android Police**








**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ